# ປຶ້ມຄູ່ມືເຜີຍແຜ່ຄວາມຮູ້ພື້ນຖານກ່ຽວກັບ

## ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ
## (ຊີດໍ)

## Convention on the Elimination of all forms of Discrimination Against Women

## C E D A W

| | | |
|---|---|---|
| **C**: | **C**onvention | = ສົນທິສັນຍາ |
| **E**: | **E**limination | = ລົບລ້າງ |
| **D**: | **D**iscrimination | = ການຈຳແນກ |
| **A**: | **A**gainst | = ຕ້ານ |
| **W**: | **W**omen | = ແມ່ຍິງ |


ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ

**Lao National Commission for the Advancement of Women**

# ຄຳນຳ

ພັກ ແລະ ລັດຖະບານແຫ່ງ ສປປ ລາວ ມີນະໂຍບາຍໃນການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງລາວບັນດາເຜົ່າ, ປະຕິບັດສິດສະເໝີພາບລະຫວ່າງຍິງ-ຊາຍທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ, ພ້ອມກັນນັ້ນ ສປປ ລາວ ກໍໄດ້ເຊັນ ຮັບຮອງເອົາສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ໃນຄັ້ງວັນທີ 18 ເດືອນ ທັນວາ 1979 ແລະ ໃຫ້ສັດຕະຍາບັນໃນວັນທີ 14 ສິງຫາ 1981 ເຖິງຢ່າງໃດກໍຕາມການຮັບຮູ້ແລະເຂົ້າໃຈຕໍ່ສົນທິສັນຍາດັ່ງກ່າວ ແມ່ນຍັງບໍ່ທັນກວ້າງຂວາງເລິກເຊິ່ງເທົ່າທີ່ຄວນ, ດັ່ງນັ້ນ, ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ (ຄ.ກ.ມ.ຊ) ໃນນາມເປັນເສນາທິການໃຫ້ລັດຖະບານໃນການປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ໃນການຈັດຕັ້ງປະຕິບັດນະໂຍບາຍກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ ກໍຄືການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ຈຶ່ງໄດ້ຮວບຮວມເອົາເນື້ອໃນສຳຄັນຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ແລະ ບັນດາເອກະສານທີ່ກ່ຽວຂ້ອງສ້າງເປັນປຶ້ມຄູ່ມືສຳລັບການອົບຮົມເຜີຍແຜ່ ເພື່ອເພີ່ມທະວີຄວາມຮັບຮູ້ຄວາມເຂົ້າໃຈໃຫ້ ຄ.ກ.ມ.ຊ ທຸກຂັ້ນຕະຫຼອດເຖິງພະນັກງານ ແລະ ມວນຊົນທົ່ວໄປ.

ປຶ້ມຄູ່ມືສະບັບນີ້ຈະເປັນຂໍ້ມູນພື້ນຖານໃຫ້ຄູເຝິກ, ນັກປາຖະກະຖາສາມາດກຳນົດເນື້ອໃນ, ວິທີການ, ລວມທັງເຄື່ອງມືທີ່ຈະນຳໃຊ້ເຂົ້າໃນການເຜີຍແຜ່ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ແລະ ຈະຊ່ວຍໃຫ້ນັກສຳມະນາກອນມີຄວາມເຂົ້າໃຈງ່າຍ ແລະ ຮັບຮູ້ຕໍ່ເນື້ອໃນຂອງສົນທິສັນຍາສະບັບດັ່ງກ່າວນີ້ຢ່າງເປັນລະບົບ.

ປຶ້ມຄູ່ມືສະບັບນີ້ແມ່ນໄດ້ຮວບຮວມຂຶ້ນເປັນເທື່ອທຳອິດ ຈຶ່ງບໍ່ອາດປາສະຈາກຂໍ້ຂາດຕົກບົກຜ່ອງໄດ້; ຫາກບັນດາທ່ານຜູ້ນຳໃຊ້ພົບເຫັນວ່າຍັງມີສິ່ງໃດບໍ່ສອດຄ່ອງເໝາະສົມ ຂໍໃຫ້ບັນດາທ່ານສົ່ງຄຳຄິດຄຳເຫັນຂອງທ່ານໄປຍັງກອງເລຂາ ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ (ຄ.ກ.ມ.ຊ) ເພື່ອຈະໄດ້ດັດແກ້, ປັບປຸງໃຫ້ດີຂຶ້ນ ແລະ ຮັບໃຊ້ເຂົ້າໃນການເຜີຍແຜ່ໄດ້ຢ່າງເໝາະສົມໃນຂັ້ນຕໍ່ໄປ.

ຂໍຂອບໃຈລ່ວງໜ້ານຳບັນດາທ່ານມານະໂອກາດນີ້ດ້ວຍ.

ຫ້ອງການກອງເລຂາ
ຄະນະກຳມາທິການ ເພື່ອຄວາມ
ກ້າວໜ້າຂອງແມ່ຍິງແຫ່ງຊາດ

# ບົດນຳສຳລັບຜູ້ອ່ານ

## ຜູ້ຊົມໃຊ້ປຶ້ມຄູ່ມື

- ບັນດາຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງແຕ່ລະຂັ້ນ (ຄ.ກ.ມ.ຊ, ຄ.ກ.ມ.ກ, ຄ.ກ.ມ.ອ, ຄ.ກ.ມ.ຂ, ຄ.ກ.ມ.ມ)
- ບັນດາຜູ້ປະຕິບັດນະໂຍບາຍ, ນັກວາງແຜນການ, ວິທະຍາກອນຄູຝຶກ ແລະ ບັນດາຜູ້ທີ່ໃຫ້ຄວາມຊ່ວຍເຫຼືອຊຸມຊົນ.

## ຈຸດປະສົງ

- ເພື່ອຕອບສະໜອງຄວາມຮູ້, ແນວຄວາມຄິດ ແລະ ເນື້ອໃນພື້ນຖານຂອງສົນທິສັນຍາ ຊີດໍ ໃຫ້ແກ່ພະນັກງານໃນການຈັດຕັ້ງຂອງພັກ-ລັດ ໃນ ສປປ ລາວ ໄດ້ເຂົ້າໃຈ ແລະ ສາມາດນຳໄປຜັນຂະຫຍາຍເຂົ້າໃນວຽກງານຕົວຈິງຂອງຂະແໜງການຕົນຢ່າງສອດຄ່ອງ.
- ເພື່ອເຮັດໃຫ້ປຶ້ມຄູ່ມືນີ້ໄດ້ເອົາໄປນຳໃຊ້ໃຫ້ເປັນປະໂຫຍດໃນການຊ່ວຍເຫຼືອບຸກຄະລາກອນທີ່ມີສ່ວນກ່ຽວຂ້ອງຢູ່ໃນວຽກງານພັດທະນາບົດບາດຍິງ-ຊາຍ ແລະ ການປົກປ້ອງສິດທິຂອງແມ່ຍິງ.

# ສາລະບານ

ໜ້າ


ບົດທີ I: ປະຫວັດຄວາມເປັນມາຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການ ຈຳແນກຕໍ່ແມ່ຍິງ (ຊີດໍ) 1

ບົດທີ II: ຄວາມໝາຍຄວາມສຳຄັນ ແລະ ຫຼັກການພື້ນຖານຂອງສົນທິສັນຍາ ຊີດໍ 5

ບົດທີ III: ອົງປະກອບ ແລະ ເນື້ອໃນຕົ້ນຕໍຂອງສົນທິສັນຍາ ຊີດໍ 12

ບົດທີ IV: ການຈັດຕັ້ງປະຕິບັດ ແລະ ຂັ້ນຕອນຂອງການຂຽນບົດລາຍງານແຫ່ງຊາດ ໃນການຈັດຕັ້ງປະຕິບັດສົນທິສັນຍາ ຊີດໍ ຢູ່ໃນ ສປປ ລາວ 18

ບົດທີ V: ບົດແນະນຳ ອະທິບາຍຄວາມໝາຍຄຳສັບ/ແນວຄວາມຄິດ 21

ບົດທີ VI: ເອກະສານອ້າງອີງ 22

# ບົດທີ I

## ປະຫວັດຄວາມເປັນມາຂອງສົນທິສັນຍາ ວ່າດ້ວຍການລົບລ້າງ ທຸກຮູບການຈຳແນກຕໍ່ແມ່ຍິງ (ຊີດໍ)

**I. ຈຸດປະສົງ**

- ເພື່ອໃຫ້ວິທະຍາກອນ ຫຼື ຜູ້ບັນຍາຍ ສາມາດອະທິບາຍ ແລະ ຮັບຮູ້ເຂົ້າໃຈ ໄດ້ເຖິງຕົ້ນກຳເນີດຂອງສົນທິສັນຍາ ຊີດໍ.
- ອະທິບາຍຂະບວນການຕໍ່ສູ້ຂອງແມ່ຍິງໃນແຕ່ລະໄລຍະ ເພື່ອການໄດ້ມາເຖິງສິດສະເໝີພາບຂອງແມ່ ຍິງ.
- ເພື່ອໃຫ້ຜູ້ເຂົ້າຮ່ວມສາມາດກຳໄດ້ເຖິງຕົ້ນກຳເນີດຂອງສົນທິສັນຍາ ຊີດໍ ແລະ ຮັບຮູ້ກ່ຽວກັບສິດທິມະນຸດຂັ້ນພື້ນຖານ.

**II. ວິທີການ**

- ນັກວິທະຍາກອນບັນຍາຍບົດຮຽນພ້ອມຍົກຕົວຢ່າງ ແລະ ບົດຮຽນຕ່າງໆທີ່ເກີດຂຶ້ນໃກ້ຄຽງກັບວຽກງານຂອງຕົນ.
- ເພື່ອປະເມີນຜົນກ່ຽວກັບການບັນຍາຍຂອງຕົນ, ຜູ້ບັນຍາຍຕ້ອງນຳພາຜູ້ເຂົ້າຮ່ວມເຮັດກິດຈະກຳ ເຊັ່ນ: ການຕອບຄຳຖາມເຈາະຈີ້ມກ່ຽວກັບບົດ, ຍົກຫົວຂໍ້ໃດໜຶ່ງໃນບົດຂຶ້ນມາສົນທະນາ.

## III. ເນື້ອໃນ

ໂດຍຮັບຮູ້ກຽດສັກສີຂອງບຸກຄົນ ແລະ ສິດສະເໝີພາບ ເຊິ່ງບໍ່ສາມາດລົບລ້າງໄດ້ຂອງສະມາຊິກທຸກຄົນໃນວົງຄະນາຍາດແຫ່ງມວນມະນຸດ ເປັນພື້ນຖານແຫ່ງອິດສະຫຼະພາບ, ຄວາມຍຸຕິທຳ ແລະສັນຕິພາບໃນໂລກ.

ດັ່ງນັ້ນ, ໃນປະຫວັດຄວາມເປັນມາຂອງສົນທິສັນຍາ ຊີດໍ ສະບັບນີ້ ຈຶ່ງເຕັມໄປດ້ວຍການຕໍ່ສູ້ທີ່ຫຼາກຫຼາຍຮູບແບບຂອງແມ່ຍິງທົ່ວໂລກ ເພື່ອປົດແອກຕົນເອງອອກຈາກການກົດຂີ່ຂົ່ມເຫັງ ແລະ ຍາດມາໄດ້ເຊິ່ງອິດສະຫຼະພາບ ແລະ ຄວາມສະເໝີພາບທີ່ເທົ່າທຽມກັນໃນທຸກດ້ານ, ຂະບວນການຕໍ່ສູ້ແມ່ນໄດ້ເລີ່ມຕົ້ນດັ່ງນີ້:

### 1. ຂະບວນການຕໍ່ສູ້ເພື່ອສິດທິຂອງແມ່ຍິງທີ່ນະຄອນນິວຢອກ, ສະຫະລັດອາເມລິກາ:

- ໃນວັນທີ 8 ມີນາ 1857 ຂະບວນການຕໍ່ສູ້ເພື່ອສິດທິຂອງແມ່ຍິງ ໄດ້ເກີດຂຶ້ນເປັນຄັ້ງທຳອິດ ໂດຍໄດ້ມີຂະບວນປະທ້ວງໃນໂຮງງານຕຳແຜ່ນ ທີ່ນະຄອນນິວຢອກ ເພື່ອກົດດັນໃຫ້ມີການປັບປຸງເງື່ອນໄຂການອອກແຮງງານທີ່ບໍ່ປອດໄພ, ການກົດຂີ່ຂູດຮີດ ແລະ ຄ່າແຮງງານຕໍ່າ; ຂະບວນການຕໍ່ສູ້ ໄດ້ແກ່ຍາວເປັນເວລາ 2 ປີ ຜູ້ອອກແຮງງານເພດຍິງ ໃນໂຮງງານດັ່ງກ່າວກໍ່ໄດ້ຮັບໄຊຊະນະເບື້ອງຕົ້ນຄື: ສາມາດຈັດຕັ້ງສະຫະພັນແຮງງານຂຶ້ນ ແລະ ໄດ້ຮັບສິດທິຂັ້ນພື້ນຖານໃນສະຖານທີ່ເຮັດວຽກຂອງເຂົາເຈົ້າ.
- ໃນວັນທີ 8 ມີນາ 1908 ແມ່ຍິງຈຳນວນ 15,000 ຄົນ ໄດ້ເດີນຂະບວນປະທ້ວງເພື່ອຮຽກຮ້ອງໃຫ້ຫຼຸດຜ່ອນຊົ່ວໂມງເຮັດວຽກ ແລະ ເພີ່ມຄ່າແຮງງານ, ໃຫ້ແມ່ຍິງມີສິດໃນການເລືອກຕັ້ງ ແລະ ຍົກເລີກການນຳໃຊ້ແຮງງານເດັກ; ການເດີນຂະບວນແມ່ນພາຍໃຕ້ຄຳຂວັນ "ເຂົ້າຈີ່ ແລະ ດອກກຸຫຼາບ" ເຊິ່ງໝາຍເຖິງຄວາມໝັ້ນຄົງທາງເສດຖະກິດ ແລະ ຄຸນນະພາບຊີວິດທີ່ດີຂຶ້ນກວ່າເກົ່າ.

- 2 ເດືອນຕໍ່ມາ ຄືໃນເດືອນພຶດສະພາ 1908 ພັກສັງຄົມນິຍົມໃນອາເມລິກາ ຈຶ່ງໄດ້ສະຖາປະນາວັນແມ່ຍິງອາເມລິກາແຫ່ງຊາດຂຶ້ນ ແລະ ຖືເອົາວັນອາທິດສຸດທ້າຍຂອງເດືອນກຸມພາ ເປັນວັນແມ່ຍິງແຫ່ງຊາດ. ດັ່ງນັ້ນ,ໃນວັນທີ 28 ກຸມພາ ປີ 1909 ແມ່ຍິງອາເມລິກາ ຈຶ່ງໄດ້ສະເຫຼີມສະຫຼອງວັນແມ່ຍິງແຫ່ງຊາດຂອງຕົນເປັນຄັ້ງທຳອິດ ແລະ ການສະເຫຼີມສະຫຼອງໄດ້ດຳເນີນຈົນຮອດປີ 1913 ຫຼັງຈາກນັ້ນ ກໍ່ເກີດສົງຄາມໂລກຄັ້ງທີ I.
- ໃນວັນທີ 25 ມີນາ 1911 ທີ່ປະເທດອາເມລິກາ ໄດ້ເກີດໄຟໄໝ້ໂຮງງານຕ່ຳແຜ່ນ "The Triangle Shirt-waist Company" ເຊິ່ງເຮັດໃຫ້ແມ່ຍິງຈຳນວນ 410 ຄົນ ເສຍຊີວິດໃນກອງໄຟ, ໂສກວິນາດສະກຳດັ່ງກ່າວເກີດຈາກການຂາດມາດຕະການຮັກສາຄວາມປອດໄພຂອງໂຮງງານທີ່ມີສິ່ງແວດລ້ອມເສື່ອມໂຊມ, ຈາກນັ້ນກໍ່ນຳໄປສູ່ການປະຕິຮູບກົດໝາຍແຮງງານຄັ້ງຍິ່ງໃຫຍ່ ແລະ ເປັນທີ່ກ່າວຂານກັນໃນວັນແມ່ຍິງສາກົນ.

## 2. ການຮຽກຮ້ອງສິດທິຂອງອົງການສັງຄົມນິຍົມສາກົນ

- ກອງປະຊຸມໃຫຍ່ຂອງອົງການສັງຄົມນິຍົມສາກົນຈັດຂຶ້ນທຳອິດໃນປີ 1910 ທີ່ນະຄອນໂກເປັນຮາເກັນ ປະເທດແດນມາກ ເຊິ່ງມີຜູ້ແທນທີ່ເປັນເພດຍິງຈຳນວນ 100 ຄົນຈາກ 17 ປະເທດທົ່ວໂລກເຂົ້າຮ່ວມ, ໃນນີ້ເປັນຄັ້ງທຳອິດທີ່ມີແມ່ຍິງ 3 ທ່ານ ຖືກເລືອກຕັ້ງເຂົ້າໃນສະພາຂອງປະເທດ ຟິນແລນ ກໍ່ໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້. ກອງປະຊຸມໄດ້ຕົກລົງເປັນເອກະສັນໃນການສ້າງຕັ້ງວັນແມ່ຍິງສາກົນຂຶ້ນເພື່ອສະດຸດີຜົນສຳເລັດຂອງການຕໍ່ສູ້ ເພື່ອສິດທິໃນການເລືອກຕັ້ງ ແລະ ສິດທິອື່ນໆຂອງແມ່ຍິງອາເມລິກາ.
- ໃນປີ 1911 ປະເທດໂອຕຣິສ (Austria), ເຢຍລະມັນ, ແດນມາກ ແລະ ສະວິດເຊີແລນ ໄດ້ສະເຫຼີມສະຫຼອງວັນແມ່ຍິງສາກົນໃນວັນທີ 19 ມີນາ ເຊິ່ງມີແມ່ຍິງ ແລະ ຜູ້ຊາຍ 1.000.000 ກ່ວາຄົນເຂົ້າຮ່ວມໃນການຍ່າງ ແລະ ຮຽກຮ້ອງສິດທິໃນການເລືອກຕັ້ງແມ່ຍິງໃນອົງການຂອງລັດ, ສິດທິໃນການເຮັດວຽກ ແລະ ຢຸດຕິການຈຳແນກໃນດ້ານວຽກເຮັດງານທຳ.

## 3. ການຮຽກຮ້ອງສິດທິຂອງແມ່ຍິງລັດເຊຍ:

- ແມ່ຍິງລັດເຊຍເຊິ່ງເປັນສ່ວນໜຶ່ງ ໃນກຳລັງຂອງຂະບວນການເພື່ອສັນຕິພາບໃນສົງຄາມໂລກ ຄັ້ງທີ I ໄດ້ສະຫຼອງວັນແມ່ຍິງຂອງຕົນໃນວັນອາທິດຂອງທ້າຍເດືອນ ກຸມພາ ໃນປີ 1913, ຫຼັງຈາກນັ້ນ 1 ປີ ກໍ່ມີການສະຫຼອງວັນແມ່ຍິງສາກົນໃນທົ່ວເອີຣົບໃນວັນທີ 8 ມີນາ ຫຼືໃນວັນໃກ້ຄຽງວັນທີດັ່ງກ່າວ.
- ໃນປີ 1917 ຫຼັງຈາກທະຫານລັດເຊຍຈຳນວນ 2,000,000 ຄົນເສຍຊີວິດໃນສົງຄາມປົກປັກຮັກສາປິຕຸພູມ, ແມ່ຍິງລັດເຊຍ ໄດ້ເດີນຂະບວນປະທ້ວງໂດຍໃຊ້ຄຳຂວັນດຽວກັນກັບແມ່ຍິງອາເມລິກາຄື: "ເຂົ້າຈີ່ ແລະ ດອກກຸຫຼາບ" ແຕ່ການເດີນຂະບວນດັ່ງກ່າວ ໄດ້ຖືກຄັດຄ້ານຈາກພະເຈົ້າຊາ. ໃນ 4 ວັນຕໍ່ມາ ພະເຈົ້າຊາຖືກໂຄ່ນລົ້ມອຳນາດ, ກົດໝາຍໃໝ່ຂອງລັດເຊຍ ກໍ່ໄດ້ໃຫ້ສິດທິແກ່ແມ່ຍິງໃນການເລືອກຕັ້ງເຊິ່ງເປັນວັນທີ 23 ມີນາ ຕາມປະຕິທິນລັດເຊຍ ແລະ ກົງກັບ ວັນທີ 8 ມີນາ ຂອງປະຕິທິນອື່ນໃນໂລກ, ນັບແຕ່ນັ້ນມາວັນດັ່ງກ່າວ ໄດ້ຖືກສະຖາປານາເປັນວັນແມ່ຍິງສາກົນ ແລະ ກໍ່ເປັນສັງກາດໃໝ່ຂອງແມ່ຍິງ ໃນທົ່ວໂລກ.

## 4. ອົງການສະຫະພັນແມ່ຍິງປະຊາທິປະໄຕສາກົນ ແລະ ສິດທິຂອງແມ່ຍິງ

ໃນເດືອນທັນວາ ປີ 1945, ອົງການສະຫະພັນແມ່ຍິງ ປະຊາທິປະໄຕສາກົນ ກໍ່ໄດ້ຖືກສ້າງຕັ້ງຂຶ້ນ ໂດຍມີຈຸດປະສົງຕ້ານສົງຄາມ ເພື່ອສິດທິແມ່ຍິງ ຄວາມເປັນທຳ ສັນຕິພາບ ເອກະລາດແຫ່ງຊາດ ແລະ ຄວາມກ້າວໜ້າທາງສັງຄົມ. ( ສປປ ລາວ ເຂົ້າເປັນສະມາຊິກອົງກອນດັ່ງກ່າວໃນປີ 1963).

## 5. ອົງການສະຫະປະຊາຊາດ (ສປຊ) ແລະ ສິດທິແມ່ຍິງ:

ໃນວັນທີ 10 ທັນວາ 1948 ກອງປະຊຸມສະມັດຊາໃຫ່ຍອົງການ ສປຊ ໄດ້ຮັບຮອງ ແລະ ປະກາດຖະແຫຼງການສາກົນ ວ່າດ້ວຍສິດທິມະນຸດທາງດ້ານພົນລະເມືອງ, ການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ຮຽກຮ້ອງໃຫ້ບັນດາປະເທດຕ່າງໆ ທີ່ເປັນສະມາຊິກຂອງອົງການ ສປຊ ປະຕິບັດພັນທະຂອງຕົນໃຫ້ບັນລຸການປະຕິບັດເນື້ອໃນຈິດໃຈຂອງຖະແຫຼງການດັ່ງກ່າວໃຫ້ເກີດໝາກເກີດຜົນ.

ຕາມຖະແຫຼງການສະບັບນີ້ ສິດທິມະນຸດແມ່ນຫຼັກຄໍ້າປະກັນກຽດສັກສີ ແລະ ຄຸນຄ່າຂອງຄວາມເປັນມະນຸດຂອງມວນມະນຸດ ທີ່ເກີດຂຶ້ນທຸກແຫ່ງຫົນຂອງໂລກ; ກຽດ ແລະ ສັກສີແມ່ນມະໂນທຳ, ຈະຣິຍະທຳຂອງມວນມະນຸດ ເຊິ່ງບໍ່ພຽງແຕ່ຈະເກີດຄວາມເຄົາລົບນັບຖືຊຶ່ງກັນ ແລະ ກັນ, ຄວາມປາດຖະໜາທີ່ດີຕໍ່ກັນບໍ່ພຽງແຕ່ໃນ ສະພາບແວດລ້ອມ ຫຼື ແນວທາງນະໂຍບາຍການເມືອງເທົ່ານັ້ນ; ແຕ່ຕ້ອງເກີດຂຶ້ນບົນພື້ນຖານລະບົບກົດ ໝາຍ ແລະ ບົນຫຼັກການ **5** ປະການເຊັ່ນ:

1. ເມື່ອເກີດເປັນມະນຸດບໍ່ວ່າຍິງ ຫຼື ຊາຍຈະຕ້ອງໄດ້ຮັບສິດອັນຊອບທຳຂອງການເກີດເປັນມະນຸດໂດຍອັດຕະໂນມັດມາແຕ່ເກີດ (Inalienable).
2. ສິດທິດັ່ງກ່າວຈະຕ້ອງຖືກປະຕິບັດຢ່າງເທົ່າທຽມກັນ ແລະ ບໍ່ມີການຈຳແນກເພດ, ເຊື້ອຊາດ, ສັນຊາດ, ສີຜິວ, ພາສາ, ສາສະໜາ, ວັດທະນະທຳ, ລັດທິການເມືອງ ແລະ ສະພາບທາງສັງຄົມ (Universal).
3. ສິດທິທີ່ໄດ້ຮັບຕ້ອງມີຄວາມກ່ຽວພັນກັນ (Interconnected).
4. ແຍກຂາດຈາກກັນບໍ່ໄດ້ ແລະ ມີນໍ້າໜັກຄວາມສຳຄັນທີ່ເທົ່າທຽມກັນ (Indivisible).
5. ເພິ່ງພາອາໃສເຊິ່ງກັນ ແລະ ກັນ (Interdependency).

- ສົນທິສັນຍາທີ່ຍາດມາໄດ້ຈາກການຕໍ່ສູ້ ເພື່ອສິດທິມະນຸດຂອງແມ່ຍິງທາງດ້ານກົດໝາຍ ໃນເວທີສາກົນ

ຜ່ານການຕໍ່ສູ້ອັນລະອິດລະອ່ຽວຂອງແມ່ຍິງ ແລະ ແນວຮ່ວມໃນເວທີສາກົນ; ສະຫະປະຊາຊາດ ໄດ້ສ້າງ ແລະ ຮັບຮອງເອົາສົນທິສັນຍາສາກົນ ທີ່ສົ່ງເສີມສິດທິມະນຸດຂອງແມ່ຍິງຫຼາຍສະບັບ ເຊິ່ງໃນໄລຍະຕໍ່ມາກໍ່ຖືກຮັບຮອງຈາກຫຼາຍປະເທດ ທີ່ເປັນສະມາຊິກຂອງອົງການ ສປຊ ເຊັ່ນ:

1. ໃນປີ 1949 ຮັບຮອງເອົາສົນທິສັນຍາ ວ່າດ້ວຍການລົບລ້າງການຄ້າມະນຸດ ແລະ ການກົດຂີ່ຂູດຮີດຈາກການຄ້າປະເວນີ; ສົນທິສັນຍາດັ່ງກ່າວ ແນໃສ່ປົກປ້ອງກຸ່ມແມ່ຍິງ ທີ່ມີຄວາມສ່ຽງສູງຕໍ່ການທາລຸນດັ່ງກ່າວ.
2. ໃນປີ 1951 ອົງການແຮງງານສາກົນ (ILO) ໄດ້ຮັບຮູ້ວ່າມີການຈຳແນກຕໍ່ແມ່ຍິງ ທີ່ອອກແຮງງານ ແລະໄດ້ກົດດັນໃຫ້ບັນດາປະເທດສະມາຊິກເຊັນສັນຍາຄໍ້າປະກັນການໄດ້ຮັບເງິນເດືອນທີ່ເທົ່າທຽມກັນລະຫວ່າງແມ່ຍິງ ແລະ ຜູ້ຊາຍໃນໜ້າວຽກທີ່ມີຄຸນຄ່າຄືກັນ.
3. ໃນປີ 1952 ຮັບຮອງເອົາສົນທິສັນຍາ ວ່າດ້ວຍສິດທິຂອງແມ່ຍິງທາງດ້ານການເມືອງ ເພື່ອຄໍ້າປະກັນການເຂົ້າຮ່ວມຂອງແມ່ຍິງໃນເວທີການເມືອງ ເຊິ່ງສົ່ງເສີມໃຫ້ມີການລົບລ້າງການຈຳແນກຕໍ່ແມ່ຍິງອົງການຕ່າງໆໃນພາກສ່ວນລັດ.

4. ໃນປີ 1956 ໄດ້ຮັບຮອງເອົາສົນທິສັນຍາ ວ່າດ້ວຍການລົບລ້າງຂ້າທາດ; ເຊິ່ງສົນທິສັນຍາດັ່ງກ່າວ ແມ່ນຜົນຂອງຄວາມພະຍາຍາມທີ່ຈະລົບລ້າງການປະພຶດປະຕິບັດ ທີ່ເຫັນແມ່ຍິງເປັນສິນຄ້າຂອງສັງຄົມ ແລະ ຄອບຄົວ, ສົນທິສັນຍາດັ່ງກ່າວນີ້ ຖືວ່າແມ່ນຕົ້ນກຳເນີດຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ.
5. ໃນປີ 1957 ຮັບຮອງເອົາສົນທິສັນຍາ ວ່າດ້ວຍສັນຊາດຂອງແມ່ຍິງທີ່ແຕ່ງງານ. ສົນທິສັນຍາສະບັບນີ້ ໄດ້ກຳນົດສິດທິການຖືສັນຊາດຂອງແມ່ຍິງທີ່ແຕ່ງງານ ໂດຍບໍ່ຂຶ້ນກັບສະຖານະພາບໃນການແຕ່ງງານຂອງເຂົາເຈົ້າ ແລະ ຄວາມເປັນເອກະລາດຈາກສັນຊາດຂອງສາມີເຂົາເຈົ້າ, ທັງນີ້ກໍ່ເພື່ອສະໜັບສະໜູນການລົບລ້າງຂ້າທາດ.
6. ໃນປີ 1964 ຮັບຮອງເອົາສົນທິສັນຍາ ວ່າດ້ວຍການແຕ່ງງານ ເຊິ່ງກຳນົດສິດທິໃນການເລືອກຄູ່ຄອງ, ອາຍຸແຕ່ງງານ ແລະ ການກຳນົດທະບຽນແຕ່ງງານຂອງແມ່ຍິງ; ສົນທິສັນຍາສະບັບນີ້ ສະແດງເຖິງການພະຍາຍາມລົບລ້າງຄວາມບໍ່ສະເໝີພາບທາງດ້ານສັງຄົມ.
7. ໃນປີ 1966 ສັນຍາສາກົນວ່າດ້ວຍສິດທິທາງດ້ານພົນລະເມືອງ ແລະ ດ້ານການເມືອງ (International Covention on Civil and Political Rights), ສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນະທຳ ເຊິ່ງເກືອດຫ້າມການຈຳແນກເພດໃນຂົງເຂດດັ່ງກ່າວຖືກສ້າງຂຶ້ນ ແລະ ມີຜົນບັງຄັບໃຊ້ໃນເວລາຕໍ່ມາ.
8. ໃນປີ 1974 ສ ປ ຊ ໄດ້ອອກຖະແຫຼງການ ວ່າດ້ວຍການປົກປ້ອງແມ່ຍິງ ແລະ ເດັກນ້ອຍ ໃນກໍລະນີສຸກເສີນ ແລະ ໃນໄລຍະສົງຄາມເຊິ່ງແມ່ນສິດທິຂອບທຳອັນໜຶ່ງຂອງເຂົາເຈົ້າ.
9. ໃນປີ 1975 ອົງການ ສປຊ ໄດ້ປະກາດເອົາປີດັ່ງກ່າວນີ້ເປັນປີສາກົນຂອງແມ່ຍິງ ແລະ ໄດ້ຈັດກອງປະຊຸມສາກົນ ກ່ຽວກັບແມ່ຍິງຄັ້ງທຳອິດ ທີ່ປະເທດແມັກຊິກໂກ ພາຍໃຕ້ຄຳຂວັນທີ່ວ່າ: "ຄວາມສະເໝີພາບ, ການປະກອບສ່ວນຂອງແມ່ຍິງໃນການພັດທະນາ ແລະ ສັນຕິພາບ" ເຊິ່ງໄດ້ເນັ້ນໜັກໃຫ້ເຫັນເຖິງບົດບາດອັນສຳຄັນຂອງແມ່ຍິງໃນການປະກອບສ່ວນ ແລະ ສິດທິໃນການຕັດສິນບັນຫາຮ່ວມກັນໃນຂົງເຂດດັ່ງກ່າວ; ໃນປີນັ້ນເອງອົງການ ສປຊ ໄດ້ປະກາດເອົາປີ 1976 ຫາ 1985ເປັນທົດສະຫວັດຂອງແມ່ຍິງ ແລະ ຕົກລົງເຫັນດີໃຫ້ກອງທຶນສະເພາະກິດສະໜັບສະໜູນປີສາກົນຂອງແມ່ຍິງຮັບໃຊ້ການຜັນຂະຫຍາຍຖະແຫຼງການແຫ່ງທົດສະວັດຂອງແມ່ຍິງ; ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ໄດ້ຮັບການຮັບຮອງຈາກກອງປະຊຸມສະມັດຊາໃຫຍ່ ສ ປ ຊ ສະໄໝທີ 34 ຄັ້ງວັນທີ 18 ທັນວາ 1979; ປັດຈຸບັນມີປະເທດຕ່າງໆ ໄດ້ໃຫ້ສັດຕະຍາບັນ ຫຼື ເຂົ້າເປັນສາມາຊິກລັດພາຄີຂອງສົນທິສັນຍາດັ່ງກ່າວແລ້ວ 189 ປະເທດ.

## ຄຳຖາມເຈາະຈີ້ມ

1. ຂະບວນການຕໍ່ສູ້ ເພື່ອສິດທິຂອງແມ່ຍິງໃນນະຄອນນິວຢອກ ຄັ້ງວັນທີ 8 ມີນາ 1908 ນັ້ນ ໄດ້ເດີນຂະບວນພາຍໃຕ້ຄຳຂວັນຊື່ວ່າແນວໃດ? ແລະ ມີຄວາມໝາຍຄືແນວໃດ?
2. ຕົ້ນກຳເນີດຂອງວັນທີ 8 ມີນາ ກຳເນີດຈາກຂະບວນການຕໍ່ສູ້ຂອງແມ່ຍິງປະເທດໃດ ? ໃນປີໃດ?
3. ໃນກອບຖະແຫຼງການສາກົນ ວ່າດ້ວຍສິດທິມະນຸດນັ້ນໄດ້ນິຍາມຄຳວ່າສິດທິມະນຸດຄືແນວໃດ? ບົນຫຼັກການຈັກປະການ?
4. ຕົ້ນກຳເນີດຂອງສົນທິສັນຍາ ຊີດໍ ນີ້ມີຕົ້ນກຳເນີດຈາກສົນທິສັນຍາສະບັບໃດ? ແລະ ສົນທິສັນຍາ ຊີດໍ ກຳເນີດຂຶ້ນໃນປີໃດ?

# ບົດທີ II

## ຄວາມໝາຍຄວາມສຳຄັນ ແລະ ຫຼັກການພື້ນຖານຂອງສົນທິສັນຍາ ຊີດໍ

### I. ຈຸດປະສົງ

- ເພື່ອໃຫ້ວິທະຍາກອນ ຫຼື ຜູ້ບັນລະຍາຍ ສາມາດອະທິບາຍ ກ່ຽວກັບຄວາມໝາຍ, ຄວາມສຳຄັນຂອງສົນທິສັນຍາ ຊີດໍ ແລະ ແຕ່ລະຫຼັກການພື້ນຖານຂອງສົນທິສັນຍາ ຊີດໍ.
- ເພື່ອໃຫ້ຜູ້ເຂົ້າຮ່ວມຮັບຮູ້ຄວາມໝາຍ ແລະ ຄວາມສຳຄັນຂອງສົນທິສັນຍາ ຊີດໍ ພ້ອມທັງສາມາດກຳໄດ້ຫຼັກການພື້ນຖານຂອງສົນທິສັນຍາ ຊີດໍ.
- ຜູ້ເຂົ້າຮ່ວມສາມາດຈຳແນກຢ່າງລະອຽດກ່ຽວກັບຫຼັກການພື້ນຖານຂອງສົນທິສັນຍາ ຊີດໍ.
- ຜູ້ເຂົ້າຮ່ວມສາມາດຮັບຮູ້ ແລະ ຈັດຕັ້ງຜັນຂະຫຍາຍ ສົນທິສັນຍາ ຊີດໍ ຕາມພາລະບົດບາດຂອງຕົນ.

### II. ວິທີການ

- ນັກວິທະຍາກອນບັນລະຍາຍບົດຮຽນພ້ອມຍົກຕົວຢ່າງ ແລະ ຖອດຖອນບົດຮຽນເປັນແຕ່ລະໄລຍະ.
- ອະທິບາຍລະອຽດກ່ຽວກັບຮູບພາບທີ່ຍົກຂຶ້ນມາ.
- ປະເມີນຜົນກ່ຽວກັບການບັນລະຍາຍຂອງຕົນ, ຜູ້ບັນລະຍາຍຕ້ອງນຳພາຜູ້ເຂົ້າຮ່ວມເຮັດກິດຈະກຳເຊັ່ນ: ການຕອບຄຳຖາມເຈາະຈົ້ມກ່ຽວກັບບົດ.
- ຍົກກໍລະນີສຶກສາ ທີ່ເຫັນວ່າຄວນມີການສົ່ງເສີມແມ່ຍິງ ຫຼື ຍົກຫົວຂໍ້ໃດໜຶ່ງ ໃນບົດຂຶ້ນມາສົນທະນາ ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຄົ້ນຄິດກ່ຽວກັບບົດເປັນຕົ້ນ ແມ່ນການຜັນຂະຫຍາຍສົນທິສັນຍາ ຊີດໍ ເຂົ້າໃນວຽກງານຕົວຈິງຂອງຂະແໜງການຕົນ.

### III. ເນື້ອໃນ

#### 1. ຄວາມໝາຍ ຄວາມສຳຄັນຂອງ ສົນທິສັນຍາ ຊີດໍ

- ການສ້າງ, ສົ່ງເສີມ ແລະ ການນຳໃຊ້ຊັບພະຍາກອນມະນຸດຢ່າງມີຄຸນຄ່າ ແລະ ບໍ່ສິ້ນເປືອງ, ເຕັມກຳລັງ ແລະ ມີປະສິດທິພາບເຂົ້າໃນການພັດທະນາຮອບດ້ານ.
- ການປະກອບສ່ວນເຂົ້າໃນຂະບວນການພັດທະນາທີ່ຍືນຍົງ ແລະ ຂະບວນການສັນຕິພາບ.
- ເປັນເຄື່ອງມືໃນການປ່ຽນແປງ ເຊິ່ງນຳມາເຊິ່ງຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍ ຢ່າງຮອບດ້ານ ແລະ ແທ້ຈິງ (ພາກລັດ, ເອກະຊົນ ແລະ ຊີວິດສ່ວນບຸກຄົນ).

## 2 . ຫຼັກການພື້ນຖານຂອງ ສົນທິສັນຍາ ຊີດໍ.

ສົນທິສັນຍາ ຊີດໍ ປະກອບດ້ວຍ 3 ຫຼັກການພື້ນຖານຄື:ຫຼັກການຄວາມສະເໝີພາບ, ຫຼັກການບໍ່ຈຳແນກ ແລະ ພັນທະຂອງລັດພາຄີ.

### 2.1 ຫຼັກການຄວາມສະເໝີພາບ

ປະກອບດ້ວຍ 3 ຮູບແບບຄື: ຮູບແບບມາດຕະຖານດຽວກັນຂອງຍິງ-ຊາຍ, ຮູບແບບປົກປ້ອງ ແລະ ຮູບແບບເບິ່ງເນື້ອໃນທີ່ແທ້ຈິງຂອງຄວາມສະເໝີພາບລະຫ່ວາງຍິງ-ຊາຍ.

#### 2.1.1 ຮູບແບບມາດຕະຖານດຽວກັນຂອງຍິງ-ຊາຍ

ອະທິບາຍຮູບພາບຕົວຢ່າງດັ່ງລຸ່ມນີ້ ເພື່ອໃຫ້ເຫັນວ່າການວາງມາດຕະຖານດຽວກັນນັ້ນອາດຈະສົ່ງຜົນກະທົບຕໍ່ແມ່ຍິງຫຼາຍກ່ວາທີ່ຈະເປັນການພັດທະນາແມ່ຍິງທີ່ຖືກຕ້ອງ.




ໃນຮູບພາບດັ່ງກ່າວປະກອບມີ: ບັນດາສັດທີ່ມີຮູບຮ່າງ, ລັກສະນະ ແລະ ສະລີລະທີ່ແຕກຕ່າງກັນ ກຳລັງກິນນ້ຳໃນອ່າງດຽວກັນ; ນີ້ແມ່ນການນຳໃຊ້ຮູບແບບມາດຕະຖານດຽວກັນ ໝາຍຄວາມວ່າສັດທຸກຊະນິດກິນນ້ຳໃນອ່າງດຽວກັນ ເຫັນວ່າມີສັດບາງຊະນິດ ບໍ່ສາມາດກິນນ້ຳໄດ້ດີ ເນື່ອງຈາກຮູບຮ່າງສະລີລະຂອງພວກເຂົາບໍ່ແທດເໝາະກັບການກິນນ້ຳໃນອ່າງແບບນີ້.

- ໂດຍທົ່ວໄປບໍ່ເຫັນໄດ້ເຖິງຄວາມແຕກຕ່າງທາງດ້ານຊີວະພາບ ແລະ ໂຄງສ້າງທາງສັງຄົມຂອງຍິງ-ຊາຍ.
- ແມ່ຍິງ = ຜູ້ຊາຍ = ມີວິທີແກ້ໄຂຄືກັນ, ລັກສະນະດັ່ງກ່າວນີ້ຈະສົ່ງເສີມທັດສະນະບອດຕໍ່ແມ່ຍິງ.
- ການນຳໃຊ້ມາດຕະຖານຂອງຜູ້ຊາຍໃສ່ຜູ້ຍິງກໍ່ຈະສົ່ງຜົນກະທົບທີ່ບໍ່ດີໃສ່ແມ່ຍິງໃນໄລຍະຍາວ.

#### 2.1.2 ຮູບແບບປົກປ້ອງ

ອະທິບາຍຮູບພາບຕົວຢ່າງດັ່ງລຸ່ມນີ້ ເພື່ອໃຫ້ເຫັນການທີ່ປົກປ້ອງແມ່ຍິງຫຼາຍເກີນໄປນັ້ນ ກໍ່ຈະເປັນການສົ່ງເສີມທັດສະນະທີ່ອ່ອນແອໃຫ້ແກ່ແມ່ຍິງ.




ໃນຮູບພາບດັ່ງກ່າວປະກອບມີ: ບັນດາສັດຕ່າງໆ ກຳລັງກິນນ້ຳໃນອະລິຍາບົດທີ່ຕົນເອງຊຳນານເຫັນໄດ້ວ່າ: ນົກກິນນ້ຳໃນໂຖຢູ່ໃນຕຸ້ມຂອງຕົນເອງ ເຊິ່ງແຍກຕົວອອກຈາກສັດປະເພດອື່ນນີ້ ໝາຍເຖິງຮູບແບບປົກປ້ອງ.

- ເຫັນໄດ້ເຖິງຄວາມແຕກຕ່າງທາງດ້ານຊີວະພາບ ແລະ ໂຄງສ້າງທາງສັງຄົມລະຫວ່າງຍິງ-ຊາຍ.
- ຊາຍ # ຍິງ (ອ່ອນແອ, ພາຍໃຕ້ການບັງຄັບບັນຊາ, ປົກປ້ອງ) # ວິທີແກ້ໄຂທີ່ແຕກຕ່າງກັນ.
- ເຫັນວ່າການຢູ່ພາຍໃຕ້ການບັງຄັບບັນຊາເປັນຂອງທຳມະດາ, ສືບທອດ ແລະ ບໍ່ສາມາດປ່ຽນແປງໄດ້, ດັ່ງນັ້ນ, ຈຶ່ງຕ້ອງປົກປ້ອງແມ່ຍິງໂດຍການປ້ອງກັນເຂົາເຈົ້າຈາກສິ່ງທີ່ຖືວ່າບໍ່ປອດໄພ.

### 2.1.3 ຮູບແບບເບິ່ງເນື້ອໃນທີ່ແທ້ຈິງຂອງຄວາມສະເໝີພາບລະຫວ່າງຍິງ-ຊາຍ

ອະທິບາຍຮູບພາບຕົວຢ່າງດັ່ງລຸ່ມນີ້ ເພື່ອໃຫ້ຮັບຮູ້ວ່າມາດຕະການຕ່າງໆທີ່ວາງອອກນັ້ນ ຄວນໃຫ້ຖືກຕ້ອງກັບສະພາບຄວາມເປັນຈິງຂອງຍິງ ແລະ ຊາຍ (ເງື່ອນໄຂພາຍນອກຕົວ ແລະ ພາຍໃນຕົວ).




ໃນຮູບພາບດັ່ງກ່າວ ສະແດງໃຫ້ເຫັນສັດທັງ 3 ຊະນິດກິນນ້ຳ ໃນສິ່ງບັນຈຸນ້ຳໃນຮູບແບບທີ່ແຕກຕ່າງກັນ ເຊິ່ງແຕ່ລະຊະນິດແມ່ນຖືກກັບສະລີລະ ແລະ ຄຸນລັກສະນະຂອງສັດເຫຼົ່ານັ້ນເຫັນວ່າພວກເຂົາໄດ້ຊົມໃຊ້ຢ່າງເຕັມສ່ວນ,ແທດເໝາະກັບສະພາບຄວາມເປັນຈິງ ແລະ ພວກເຂົາເຫຼົ່ານັ້ນ ກໍ່ໄດ້ຮັບຜົນປະໂຫຍດຫຼາຍທີ່ສຸດ.

- ເຫັນໄດ້ຄວາມແຕກຕ່າງທາງດ້ານຊີວະພາບ ແລະ ໂຄງສ້າງທາງສັງຄົມລະຫວ່າງຍິງ-ຊາຍ.
- ແກ້ໄຂບົນພື້ນຖານຄວາມເໝາະສົມ ແລະ ຫຼາຍຮູບການ, ຄວາມແຕກຕ່າງຂອງສາຍເພດ, ຜົນທີ່ໄດ້ຮັບ ແລະ ຜົນກະທົບໂດຍບໍ່ມີການຈຳແນກ.
- ສິ່ງເຫຼົ່ານັ້ນນຳມາເຊິ່ງຄວາມສະເໝີພາບທາງດ້ານກົດໝາຍ ແລະ ທາງດ້ານໝາກຜົນຂອງການປະຕິບັດກົດໝາຍ ຊຶ່ງສົນທິສັນຍາ ຊີດໍ ແມ່ນເນັ້ນໃຫ້ນຳໃຊ້ເນື້ອໃນແທ້ຈິງ ຂອງຄວາມສະເໝີພາບລະຫວ່າງຍິງ-ຊາຍ.

## 2.2 ຫຼັກການບໍ່ຈຳແນກ

- ກ່ອນອື່ນຕ້ອງຮັບຮູ້ວ່າ: ການຈຳແນກເກີດມາຈາກຫຍັງ? ອະທິບາຍຕາມແຜນວາດດັ່ງລຸ່ມນີ້:

ແນວຄວາມຄິດຂອງກະແສຫຼັກ ( ທັດສະນະຄະຕິລຳອຽງທາງເພດ)

↓

ການກະທຳ (ຈຳແນກ, ຈຳກັດ, ກີດກັ້ນບໍ່ໃຫ້ເຂົ້າຮ່ວມ)

↙ ↓ ↘

ແບບເຈຕະນາ (ໂດຍກົງ) | ແບບບໍ່ເຈຕະນາ (ທາງອ້ອມ)

ຜົນທີ່ຕາມມາ (ມີຜົນຫຼືຈຸດປະສົງເພື່ອ)

↓

ທຳລາຍ ຫຼື ລົບລ້າງ

↙ ↓ ↘

ການຮັບຮູ້ | ຄວາມເພິ່ງພໍໃຈ | ການກະທຳ

- ຫຼັກການບໍ່ມີການຈຳແນກໃນຂອບເຂດຂອງ ຊີດໍ:

  ບໍ່ໃຫ້ມີການຈຳແນກທຸກຮູບການຄື:

  – ຂົງເຂດສິດ.
  – ຄວາມເຊື່ອ, ທ່າທີ, ທັດສະນະ ແລະ ການປະພຶດປະຕິບັດ.
  – ໃນລະບອບ, ລະບົບ, ລະບຽບ.
  – ໃນສະຖາບັນ ແລະ ການຈັດຕັ້ງ.
  – ໃນຂົງເຂດລັດ, ເອກະຊົນ ແລະ ຊີວິດສ່ວນຕົວ.

## 2.3 ພັນທະຂອງລັດພາຄີ

ລັດພາຄີຂອງສົນທິສັນຍາສາກົນວ່າດ້ວຍສິດທິມະນຸດມີພັນທະຮັບປະກັນສິດສະເໝີພາບລະຫວ່າງຍິງ-ຊາຍໃນການໄດ້ຮັບສິດທາງດ້ານເສດຖະກິດ, ສັງຄົມ, ວັດທະນະທຳ, ສິດທາງດ້ານພົນລະ ເຮືອນ ແລະ ການເມືອງ.

ດັ່ງນັ້ນລັດພາຄີຈະຕ້ອງໄດ້ປະຕິບັດຕາມພັນທະຂອງຕົນດັ່ງນີ້:

1. ເຄົາລົບ ແລະ ປະຕິບັດບັນດາສິດທິ ທີ່ບົ່ງໄວ້ໃນສົນທິສັນຍາຢ່າງຄົບຖ້ວນ.
2. ໃຈ້ແຍກ, ແກ້ໄຂ, ເກືອດຫ້າມ ແລະ ລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ທີ່ຈະເກີດຂຶ້ນໃນປະຈຸ ບັນ ແລະ ອະນາຄົດ
3. ປ້ອງກັນບໍ່ໃຫ້ມີການຈຳແນກຕໍ່ແມ່ຍິງໃນອະນາຄົດ
4. ສົ່ງເສີມ ແລະ ເລັ່ງລັດການປະຕິບັດສິດທິຂອງແມ່ຍິງ ແລະ ຄວາມສະເໝີພາບໂດຍນຳໃຊ້ມາດຕະການ.
5. ຄ້ຳປະກັນໝາກຜົນທີ່ໄດ້ຮັບຈາກການປະຕິບັດສົນທິສັນຍາ.
6. ລາຍງານການດຳເນີນງານທີ່ສາມາດຢັ້ງຢືນໄດ້ຕາມກຳນົດ.

- ຢາກປະຕິບັດໄດ້ດີແນວນັ້ນລັດພາຄີຈະຕ້ອງມີ:

  – ເຈດຕະນາລົມທາງດ້ານການເມືອງອັນແຮງກ້າ.
  – ຄວາມຕັ້ງໃຈຈິງ ແລະ ຄວາມພະຍາຍາມສູງ.
  – ມີກົນໄກ ແລະ ເຄື່ອງມືທີ່ມີປະສິດທິພາບ.
  – ມີມາດຕະການໄລຍະສັ້ນ ແລະ ໄລຍະຍາວ.
  – ມີຊັບພະຍາກອນທີ່ສົມເຫດສົມຜົນ.

## IV. ຄຳຖາມເຈາະຈີ້ມ

1. ສົນທິສັນຍາ ຊີດໍ ມີຄວາມໝາຍຄວາມສຳຄັນຄືແນວໃດ? ໃຫ້ອະທິບາຍລະອຽດ ?
2. ຫຼັກການພື້ນຖານຂອງສົນທິສັນຍາ ຊີດໍ ມີຈັກຫຼັກການ? ໃນນັ້ນຫຼັກການໃດທີ່ເຫັນວ່າຄວນຈັດຕັ້ງປະຕິບັດ?
3. ການຈຳແນກເກີດມາຈາກໃສ ? ແລະ ຜົນກະທົບທີ່ຕາມມາຈະນຳໄປຖືກພາກສ່ວນໃດ ?
4. ພັນທະຂອງລັດພາຄີຈະຕ້ອງປະຕິບັດຄືແນວໃດ?

## ກໍລະນີສຶກສາທີ 1: ກ່ຽວກັບຫຼັກການພື້ນຖານຂອງສົນທິສັນຍາ ຊີດໍ

ຄໍາພາ ແລະ ໝູ່ເດັກນ້ອຍອີກຫຼາຍຄົນທີ່ອາໃສໃນໝູ່ບ້ານເກືອບວ່າບໍ່ສາມາດອ່ານ ແລະ ຂຽນໜັງສືໄດ້, ພວກເດັກນ້ອຍເຫຼົ່ານີ້ ບໍ່ຮູ້ຫຍັງເລີຍກ່ຽວກັບໂລກພາຍນອກ, ພວກເຂົາອາໃສຢູ່ໃນເຂດຫ່າງໄກສອກຫຼີກ,ເຊິ່ງໝູ່ບ້ານດັ່ງກ່າວມີປະຊາຊົນອາໃສຢູ່ປະມານ 20 ຫຼັງຄາເຮືອນ, 30 ຄອບຄົວ ອາຊີບສ່ວນໃຫຍ່ຂອງພວກເຂົາແມ່ນເຮັດໄຮ່ ແລະ ຊອກຢູ່ຫາກິນນໍາປ່າດົງ, ພວກເຂົາຍັງຍຶດຖືຮີດຄອງປະເພນີທີ່ເກົ່າແກ່ຢ່າງເຄັ່ງຄັດ; ປີນີ້ຄໍາພາ ອາຍຸໄດ້ 12 ປີແລ້ວ, ເຊິ່ງຕາມເກນອາຍຸຂອງລາວແມ່ນຕ້ອງຈົບຊັ້ນປະຖົມຂັ້ນພື້ນຖານແລ້ວ ແຕ່ລາວຍັງບໍ່ສາມາດອ່ານ ແລະ ຂຽນໜັງສືໄດ້ດີ ຍ້ອນລາວອອກຈາກໂຮງຮຽນຕັ້ງແຕ່ລາວເສັງຂຶ້ນຊັ້ນປະຖົມປີທີ 3, ຄໍາພາກໍຄືເດັກຄົນອື່ນໆ ໃນໝູ່ບ້ານທີ່ພໍ່ແມ່ໃຫ້ອອກໂຮງຮຽນກ່ອນການຈົບຊັ້ນປະຖົມ, ຍ້ອນພໍ່ແມ່ຂອງພວກເຂົາບໍ່ຮູ້ເຖິງຄວາມສໍາຄັນຂອງການສຶກສາອັນເປັນພື້ນຖານຕົ້ນຕໍ ໃນການຫຼຸດຜ່ອນຄວາມທຸກຍາກ ແລະ ສ້າງໂອກາດໃຫ້ລູກຂອງພວກເຂົາໄດ້ມີວຽກເຮັດງານທໍາ ແລະ ສາມາດຫາລາຍໄດ້ມາສູ່ຄອບຄົວ.

ພັກ-ລັດຖະບານ ສປປ ລາວ ໄດ້ເອົາໃຈໃສ່ປະຕິບັດນະໂຍບາຍພັດທະນາການສຶກສາແຫ່ງຊາດ ໃຫ້ມີຄຸນນະພາບ, ສ້າງໂອກາດ ແລະ ເງື່ອນໄຂໃຫ້ປະຊາຊົນ ໄດ້ຮັບການສຶກສາຢ່າງທົ່ວເຖິງ ໂດຍສະເພາະ ປະຊາຊົນທີ່ຢູ່ເຂດຫ່າງໄກສອກຫຼີກ, ຊົນເຜົ່າ, ແມ່ຍິງ, ເດັກນ້ອຍ ແລະ ຜູ້ດ້ອຍໂອກາດ. ດັ່ງນັ້ນໃນເຂດຊົນເຜົ່າ ແລະ ຫ່າງໄກສອກຫຼີກ ຈຶ່ງມີນະໂຍບາຍໃນການສ້າງໂຮງປະຖົມກິນນອນຊົນເຜົ່າ ແລະ ກຸ່ມໂຮງຮຽນ ໂດຍການກວມເອົາຫຼາຍບ້ານແລ້ວສ້າງໂຮງຮຽນ 1 ຫຼັງ; ຄໍາພາກໍເປັນເດັກຍິງຄົນໜຶ່ງທີ່ໄດ້ຊົມໃຊ້ນະໂຍບາຍດັ່ງກ່າວ, ແຕ່ຍ້ອນຄວາມບໍ່ເຂົ້າໃຈ ແລະ ຄວາມຮັບຮູ້ຂອງພໍ່ແມ່ລາວ ໃນການໃຫ້ຄວາມສໍາຄັນຂອງການສຶກສາ, ຈຶ່ງໃຫ້ຄໍາພາອອກຈາກໂຮງຮຽນກ່ອນການຈົບຊັ້ນປະຖົມຂັ້ນພື້ນຖານ ເພື່ອມາຊ່ວຍວຽກພໍ່ແມ່ໃນການຊອກຢູ່ຫາກິນ; ແຕ່ລະມື້ຄໍາພາຕ້ອງຊ່ວຍພໍ່ແມ່ໃນການຕັກນໍ້າ, ຊອກຟືນ, ແຕ່ງກິນ, ເອົານ້ອງ ແລະ ອື່ນໆ ເນື່ອງຈາກແມ່ຂອງຄໍາພາຫາກໍເກີດລູກໃໝ່ ແລະ ລາວໄດ້ນ້ອງຜູ້ນີ້ເປັນຜູ້ ທີ 4 ແລ້ວ, ດັ່ງນັ້ນພາລະໃນການເຮັດວຽກເຮືອນເກືອບທັງໝົດເປັນຄວາມຮັບຜິດຊອບຂອງຄໍາພາ, ນັ້ນເປັນພຽງສາເຫດໜຶ່ງເທົ່ານັ້ນ ທີ່ເປັນສາເຫດອັນສໍາຄັນໃນການອອກຈາກໂຮງຮຽນຂອງຄໍາພາ ແມ່ນເນື່ອງຈາກໂຮງຮຽນທີ່ລາວເຂົ້າຮຽນນັ້ນ ເປັນໂຮງຮຽນຄວບກັນຫຼາຍບ້ານ (ກຸ່ມໂຮງຮຽນ); ເມື່ອຄັ້ງລາວຍັງຮຽນໜັງສືລາວຕ້ອງຕື່ນແຕ່ເຊົ້າ ເພື່ອເຮັດວຽກເຮືອນຊ່ວຍພໍ່ແມ່ ແລ້ວຈຶ່ງໄປໂຮງຮຽນ, ໄລຍະທາງໃນການໄປໂຮງຮຽນປະມານ 6 ກິໂລແມັດ, ເຊິ່ງເຮັດໃຫ້ພໍ່ ແລະ ແມ່ຂອງລາວເປັນຫ່ວງໃນການເດີນທາງໄປໂຮງຮຽນຂອງລາວຫຼາຍ, ຕາມຮີດຄອງປະເພນີພວກເຂົາຖືວ່າເດັກຍິງບໍ່ຄວນອອກໄປໄກຈາກບ້ານ ແລະ ການເຮັດວຽກເຮືອນແມ່ນໜ້າທີ່ຫຼັກຂອງແມ່ຍິງ.

ຍ້ອນການເຊື່ອຖືຄືແນວນີ້ ຈຶ່ງເຮັດໃຫ້ຄໍາພາ ແລະ ເດັກນ້ອຍອີກຫຼາຍຄົນ ໃນໝູ່ບ້ານຕ້ອງຂາດໂອກາດໃນການສຶກສາຮໍ່າຮຽນ, ພວກເຂົາບໍ່ຮູ້ວ່າອະນາຄົດຂອງພວກເຂົາຈະເປັນແນວໃດ, ພວກເຂົາຈະມີອາຊີບຫຍັງຫາລ້ຽງຄອບຄົວ ເພື່ອພ້ອມກັນຫຼຸດພົ້ນອອກຈາກສະພາບຄວາມທຸກຍາກ ແລະ ຈະເຮັດແນວໃດເພື່ອໃຫ້ລູກໆຂອງເຂົາເຈົ້າບໍ່ໃຫ້ເປັນຄືເຂົາເຈົ້າ.

<u>ບົດເຝິກຫັດ:</u>

1. ທ່ານ ຄິດວ່ານະໂຍບາຍທີ່ມີນັ້ນສອດຄ່ອງ ແລະ ແທດເໝາະແລ້ວບໍ່ສໍາລັບເດັກນ້ອຍເຫຼົ່ານັ້ນ? ຫຼື ທ່ານຄິດວ່າຄວນວາງມາດຕະການແນວໃດ ເພື່ອໃຫ້ເຂົາເຈົ້າສາມາດໄດ້ຮັບຜົນປະໂຫຍດສູງສຸດ?
2. ການປະພຶດຂອງພໍ່ແມ່ເຂົາເຈົ້າຄືແນວນັ້ນຂັດກັບຫຼັກການພື້ນຖານຂໍ້ໃດ ແລະ ຕົກຢູ່ໃນຮູບແບບໃດຂອງສົນທິສັນຍາ?

## ກໍລະນີສຶກສາທີ 2: ກ່ຽວກັບແນວຄວາມຄິດກະແສຫຼັກ (ທັດສະນະຄວາມຄິດ)

ໂຄງການພັດທະນາຊຸມຊົນ ສົ່ງເສີມກິດຈະກຳການເງິນຂະໜາດນ້ອຍໃຫ້ແກ່ຊາວບ້ານເຊິ່ງຢູ່ໃນເຂດຊົນນະບົດຫ່າງໄກສອກຫຼີກ, ກົດລະບຽບຂອງກອງທຶນໂຄງການ ແມ່ນມອບໃຫ້ຊາວບ້ານເປັນຜູ້ຄຸ້ມຄອງບໍລິຫານໂດຍມີຂໍ້ກຳນົດວ່າ:

1. ທຸກຄອບຄົວມີສິດເທົ່າທຽມກັນທີ່ເປັນສະມາຊິກຝາກ ແລະ ຢືມເງິນຂອງກອງທຶນ.
2. ຊາວບ້ານຕ້ອງແຕ່ງຕັ້ງຄະນະບໍລິຫານກອງທຶນໂດຍຮັບປະກັນໃຫ້ແມ່ຍິງ ແລະ ຜູ້ຊາຍຮ່ວມກັນ, ພ້ອມທັງແນະນຳວ່າ: ແຕ່ລະບ້ານໃຫ້ມີ 8 ຄົນ ເປັນຄະນະບໍລິຫານກອງທຶນ, ໃນນັ້ນໃຫ້ມີຜູ້ຊາຍ 6 ຄົນ, ແມ່ຍິງ 2 ຄົນ. ໜ້າທີ່ຂອງຄະນະກຳມະການ ທີ່ເປັນແມ່ຍິງແມ່ນມອບໃຫ້ກຳເງິນສົດ (1 ຄົນ); ອີກ 1 ຄົນ ແມ່ນເປັນຜູ້ເບີກຈ່າຍ ຫຼື ຮັບເງິນຕາມທີ່ຫົວໜ້າຄະນະຈະເປັນຜູ້ບອກກ່ອນ.

♦ <u>ໃນຄວາມເປັນຈິງແມ່ນ:</u>

- ໂດຍສ່ວນໃຫຍ່ເຫັນວ່າໃນປຶ້ມສະມາຊິກກອງທຶນມີແຕ່ຊື່ຫົວໜ້າຄອບຄົວ (ຜູ້ຊາຍ) ເປັນເຈົ້າຂອງປຶ້ມເງິນຝາກ-ຮັບ, ຄະນະກຳມະການອະທິບາຍວ່າ: ພວກເຮົາໃສ່ຊື່ຫົວໜ້າຄອບຄົວຄືແນວນັ້ນ ກໍ່ເພາະລາວເປັນຜູ້ຕາງໜ້າຄອບຄົວ ແລະ ລາວຈະເປັນຜູ້ຮັບຜິດຊອບຖ້າຄອບຄົວໃດໜຶ່ງ ບໍ່ສາມາດປະຕິບັດລະບຽບຂອງກອງທຶນໄດ້;ຖ້າເມຍເຂົາເຈົ້າຕ້ອງການເອົາປຶ້ມສະມາຊິກມາຝາກ ຫຼື ຖອນເງິນກໍ່ໄດ້ເພາະຄະນະກຳມະການຢູ່ໃນບ້ານຂອງເຂົາ ເຈົ້າຮູ້ວ່າແມ່ນເມຍຂອງໃຜ?
- ເວລາລົງໄປຕິດຕາມມີແມ່ຍິງຈຳນວນໜຶ່ງບອກວ່າ ຍາມຜົວບໍ່ຢູ່ ບໍ່ສາມາດໄປເບີກເງິນໄດ້ ເພາະຜົວຂອງລາວເຊື່ອງປຶ້ມໄວ້ໃສບໍ່ຮູ້; ອີກພວກໜຶ່ງບອກວ່າເຂົາເຈົ້າທ້ອນເງິນຂາຍສາລີໄດ້ໜ້ອຍໜຶ່ງຢາກເອົາໄປຝາກໃສ່ຊື່ໂຕເອງໄວ້ ແຕ່ຜົວພັດບອກວ່າຝາກນຳກັນໃສ່ປຶ້ມຫົວດຽວກັນກໍໄດ້.
- ເວລາລົງໄປຕິດຕາມພວກກຸ່ມແມ່ຍິງບອກວ່າ ເພື່ອນຮ່ວມບ້ານຂອງເຂົາເຈົ້າ ທີ່ແມ່ນພວກແມ່ຍິງຜູ້ທຸກຍາກແທ້ໆ ຍິ່ງບໍ່ກ້າເປັນສະມາຊິກກອງທຶນຊໍ້າເພາະບໍ່ມີເງິນຈະເສຍຄ່າເປັນສະມາຊິກ, ບໍ່ມີເງິນຈະຝາກ, ມີແຕ່ຢາກຢືມ ແລະ ຄະນະກໍ່ບໍ່ກ້າໃຫ້ຢືມ ເພາະຢ້ານເສຍທຶນລ້າໆເພາະເຂົາເຈົ້າຈະບໍ່ມີຄວາມສາມາດໃຊ້ທຶດແທນຄືນ; ຍິ່ງໄປກວ່ານັ້ນແມ່ຍິງທຸກຍາກຈຳນວນໜຶ່ງກໍ່ຢູ່ຜູ້ດຽວ (ບໍ່ມີຜົວ), ຍິ່ງເຮັດໃຫ້ພວກເຂົາບໍ່ມີໂອກາດຈະໄດ້ຮັບຜົນປະໂຫຍດຈາກກອງທຶນດັ່ງກ່າວ.

<u>ບົດເຝິກຫັດ:</u>

1. ທ່ານຄິດແນວໃດກ່ຽວກັບກົດລະບຽບຂອງກອງທຶນ, ມີຄວາມສະເໝີພາບລະຫວ່າງແມ່ຍິງ ແລະ ຜູ້ຊາຍແລ້ວບໍ? ມີການຈຳແນກແນວໃດ? ທ່ານຄິດວ່າຄວນເຮັດແນວໃດ ?
2. ເພື່ອເຮັດໃຫ້ມີຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນຕົວຈິງ ໄດ້ໃນການປະຕິບັດໂຄງການການເງິນຂະໜາດນ້ອຍ, ກະລຸນາອະທິບາຍວິທີການແກ້ໄຂໃນແບບຂອງທ່ານ ໂດຍເບິ່ງໃສ່ຂອບຂອງສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (ຊີດໍ) ?

# ກໍລະນີສຶກສາທີ 3: ການປົກປ້ອງຫຼາຍເກີນໄປກໍຈະເປັນການສົ່ງເສີມທັດສະນະທີ່ອ່ອນແອ

ການສັກຢາປ້ອງກັນພະຍາດແມ່ຍິງ ແລະ ເດັກນ້ອຍ ເປັນກິດຈະກຳໜຶ່ງຂອງແຜນງານລັດຖະບານ ທີ່ສະແດງເຖິງການປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ ໃນການຮັກສາສຸຂະພາບຂອງເຂົາເຈົ້າ.

ມີຄະນະປະເມີນຜົນກຸ່ມໜຶ່ງ ໄດ້ໄປຖາມແມ່ຍິງ ເຊິ່ງຢູ່ບ້ານຊົນເຜົ່າຢູ່ເຂດຊົນນະບົດວ່າ: ເຂົາເຈົ້າໄດ້ຮັບການ ສັກຢາກັນພະຍາດໃຫ້ຕົນເອງ ແລະ ລູກນ້ອຍຄົບທຸກເຂັມບໍ? ພວກແມ່ຍິງຈຳນວນນັ້ນໄດ້ຕອບວ່າ: ບໍ່ຮູ້ວ່າຕ້ອງສັກຢາອີກຈັກເຂັມຈຶ່ງຈະຄົບ; ເພາະພະນັກງານທີ່ໄປສັກຢາຢູ່ບ້ານມີບັນຊີລາຍຊື່ແລ້ວ ເພິ່ນຈະເປັນຜູ້ບອກເອງວ່າຜູ້ໃດສັກຢາຄົບ ຫຼື ໃຜຍັງບໍ່ຄົບ.

ພວກແມ່ຍິງເລົ່າຕໍ່ໄປອີກວ່າ: ສ່ວນຫຼາຍເດັກນ້ອຍເກີດໃໝ່ ບໍ່ໄດ້ສັກຢາຕາມແພດແນະນຳ ເພາະຜົວບອກວ່າ: ລູກຍັງນ້ອຍໂພດ, ອີດູຕົນຢ້ານລູກເຈັບ, ບາດລູກໃຫຍ່ແລ້ວ ຈຶ່ງເອົາໄປສັກ; ແຕ່ເມື່ອພວກເຂົາໃຫຍ່ແລ້ວເອົາໄປສັກ ແພດກໍ່ບອກວ່າຊ້າແລ້ວ ສຳລັບສັກເຂັມທີ 1, ເພາະເຂັມທຳອິດແມ່ນຕ້ອງສັກແຕ່ໄລຍະທຳອິດທີ່ລາວເກີດອອກມາ; ແມ່ຍິງເລີຍເລົ່າຕໍ່ໄປວ່າມັນກໍຍາກແລ້ວສຳລັບເຂົາເຈົ້າ, ເພາະຕາມປະເພນີແລ້ວ ຫຼັງຈາກເກີດລູກແລ້ວພາຍໃນ 1 ເດືອນແມ່ນບໍ່ໃຫ້ແມ່ ແລະ ລູກນ້ອຍອອກຈາກເຮືອນໄປໃສ ເພາະຢ້ານຜີກິນເຊິ່ງເປັນຄວາມເຊື່ອຖື ຂອງເຈົ້າກົກເຈົ້າເຫຼົ່າຂອງພວກເຂົາ.

<u>ບົດເຝິກຫັດ:</u>

1. ທ່ານຄິດແນວໃດກັບການບໍລິການສັກຢາໃຫ້ແມ່ຍິງ ແລະ ເດັກນ້ອຍ ເປັນວຽກງານທີ່ຮັບປະກັນຄວາມສະເໝີພາບຂອງແມ່ຍິງ ກັບຜູ້ຊາຍບໍ ?
2. ທ່ານຄິດວ່າຄວນແກ້ໄຂດ້ວຍວິທີໃດ, ກະລຸນາອະທິບາຍວິທີການແກ້ໄຂ ໂດຍເນື່ອງໃສ່ຂອບຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (ຊີດໍ)?

# ບົດທີ III

## ອົງປະກອບ ແລະ ເນື້ອໃນຕົ້ນຕໍ ຂອງສົນທິສັນຍາ ຊີດໍ

**I. ຈຸດປະສົງ**

- ເພື່ອໃຫ້ວິທະຍາກອນ ຫຼື ຜູ້ບັນລະຍາຍ ສາມາດອະທິບາຍກ່ຽວກັບ ເນື້ອໃນທີ່ແທ້ຈິງ ທີ່ປາກົດຢູ່ໃນແຕ່ລະມາດຕາຂອງສົນທິສັນຍາ ຊີດໍ , ພ້ອມທັງຊີ້ໃຫ້ເຫັນເຖິງ ອົງປະກອບຂອງສົນທິສັນຍາ ຊີດໍ;
- ເພື່ອໃຫ້ຜູ້ເຂົ້າຮ່ວມຮັບຮູ້ ແລະ ສາມາດກຳໄດ້ເນື້ອໃນຕົ້ນຕໍ ແລະ ນິຍາມຂອງການຈຳແນກຂອງສົນທິສັນຍາ ຊີດໍ;
- ເຮັດໃຫ້ຜູ້ເຂົ້າຮ່ວມສາມາດວິເຄາະ ກ່ຽວກັບການຈຳແນກນັ້ນວ່າສິ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດສົນທິສັນຍາ ຊີດໍ ຄືແນວໃດ ?

**II. ວິທີການ**

- ນັກວິທະຍາກອນບັນລະຍາຍບົດຮຽນພ້ອມຍົກຕົວຢ່າງ
- ອະທິບາຍລະອຽດກ່ຽວກັບນິຍາມຂອງການຈຳແນກ ພ້ອມທັງຊີ້ໃຫ້ເຫັນຜົນກະທົບທີ່ຕາມມາ ຖ້າຫາກມີການຈຳແນກ
- ປະເມີນຜົນກ່ຽວກັບການບັນລະຍາຍຂອງຕົນ, ຜູ້ບັນລະຍາຍຕ້ອງນຳພາຜູ້ເຂົ້າຮ່ວມເຮັດກິດຈະກຳເຊັ່ນ: ການຕອບຄຳຖາມເຈາະຈີ້ມກ່ຽວກັບບົດ.
- ຍົກກໍລະນີສຶກສາທີ່ເຫັນວ່າບໍ່ຄວນມີການຈຳແນກຕໍ່ແມ່ຍິງໃນທຸກຂົງເຂດ ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຄົ້ນຄິດກ່ຽວກັບບົດເປັນຕົ້ນແມ່ນການຜັນຂະຫຍາຍສົນທິສັນຍາ ຊີດໍ ເຂົ້າໃນວຽກງານຕົວຈິງຂ

**III. ເນື້ອໃນ**

1. ອົງປະກອບຂອງສົນທິສັນຍາ ຊີດໍ ປະກອບດ້ວຍ:

- ສິດທິມະນຸດທີ່ເທົ່າທຽມກັນ ລະຫວ່າງຍິງ—ຊາຍ.
- ອິດສະຫຼະພາບຂັ້ນພື້ນຖານໃນແຕ່ລະດ້ານ: ພົນລະເມືອງ, ການເມືອງ, ເສດຖະກິດ-ສັງຄົມ ແລະ ວັດທະນະທຳ.
- ການປະກອບສ່ວນຂອງລັດພາຄີ: ຄວາມຕັ້ງໃຈຈິງ, ນະໂຍບາຍ, ການກະທຳ ແລະ ການຕິດຕາມການລາຍງານ.
- ຄະນະກຳມະການ ຊີດໍ ພິຈາລະນາບົດລາຍງານແຫ່ງຊາດຂອງລັດພາຄີແລ້ວສົ່ງບົດປະກອບຄຳເຫັນມ້ວນທ້າຍໃຫ້ລັດພາຄີ.

## 2. ເນື້ອໃນຕົ້ນຕໍຂອງສົນທິສັນຍາ ຊີດໍ

ສົນທິສັນຍາຊີດໍ ແມ່ນກົດໝາຍສາກົນທີ່ຄໍ້າປະກັນເຖິງສິດຜົນປະໂຫຍດ ແລະ ໂອກາດຕ່າງໆ ທີ່ແມ່ຍິງຈະຕ້ອງໄດ້ຮັບຈາກລັດຖະບານບົນພື້ນຖານຄວາມສະເໝີພາບລະຫວ່າງຍິງ-ຊາຍ; ສິດທິຂອງແມ່ຍິງ ແລະ ຜູ້ຊາຍໃນການປົກຄອງດູແລລູກ ແລະ ຄອບຄົວ, ການໄດ້ຮັບການສຶກສາ, ຮັບການບໍລິການດ້ານສຸຂະພາບ, ການປະກອບອາຊີບ, ເສລີພາບທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ສິດໃນການຮ່ວມວາງແຜນ ແລະ ຈັດຕັ້ງແຜນການໃນທຸກຂັ້ນ.

- ເນື້ອໃນຂອງສົນທິສັນຍາ ຊີດໍ ມີບົດບັນຍັດລວມ **30** ມາດຕາ ແລະ ໄດ້ແບ່ງອອກເປັນ **5** ພາກດັ່ງນີ້:

– ມາດຕາ **1:** ນິຍາມການຈໍາແນກ.

– ມາດຕາ **2-5:** ພັນທະຂອງລັດພາຄີ (ພັນທະທາງດ້ານວິຊາການ ແລະ ຜົນທີ່ໄດ້ຮັບ).

– ມາດຕາ **6-16:** ເນື້ອໃນຂອງສົນທິສັນຍາ ຊີດໍ ໃນຂົງເຂດຕ່າງໆ.

– ມາດຕາ **17-23:** ຄະນະກໍາມະການ ຊີດໍ ແລະ ຂັ້ນຕອນຕ່າງໆ

– ມາດຕາ **24-30:** ການບໍລິຫານຄຸ້ມຄອງ ແລະ ການຕີຄວາມໝາຍ

## 3. ເນື້ອໃນໂດຍຫຍໍ້ແຕ່ລະພາກ

### 3.1 ພາກທີ I: ມາດຕາ **1:** ນິຍາມການຈໍາແນກຕໍ່ແມ່ຍິງ:

ການຈໍາແນກຕໍ່ແມ່ຍິງໝາຍເຖິງທຸກການແບ່ງແຍກ, ການກີດກັ້ນບໍ່ໃຫ້ເຂົ້າຮ່ວມ ຫຼື ການຈໍາກັດ ດ້ວຍເຫດຜົນທາງເພດ, ເຊິ່ງມີຜົນ ຫຼື ຈຸດປະສົງແຕະຕ້ອງ ຫຼື ປະຕິເສດການຮັບຮູ້, ການຊົມໃຊ້ ຫຼື ການປະຕິບັດສິດທິມະນຸດ ແລະ ອິດສະຫຼະພາບຂອງແມ່ຍິງໃນດ້ານການເມືອງ, ເສດຖະກິດ, ສັງ ຄົມ, ວັດທະນະທໍາ, ພົນລະເຮືອນ ແລະ ດ້ານອື່ນໆ ໂດຍບໍ່ຖືວ່າຈະເປັນໂສດ ຫຼື ບໍ່ກໍຕາມ ແລະ ບົນ ພື້ນຖານຄວາມສະເໝີພາບຂອງຍິງ ແລະ ຊາຍ.

### 3.2 ພາກທີ II: ມາດຕາ **2-5:** ພັນທະຂອງລັດພາຄີ (ພັນທະທາງດ້ານວິຊາການ ແລະ ຜົນທີ່ໄດ້ຮັບ):

– ລັດພາຄີຈະຕ້ອງໄດ້ບັນຍັດ ຫຼັກການແຫ່ງຄວາມສະເໝີພາບ ລະຫວ່າງຍິງ-ຊາຍ, ການປົກປ້ອງສິດຂອງແມ່ຍິງ ແລະ ທຸກການກະທໍາທີ່ບໍ່ເປັນການຈໍາແນກແມ່ຍິງໄວ້ໃນລັດຖະທໍາມະນູນ, ກົດໝາຍ ແລະ ນິຕິກໍາອື່ນໆໃຫ້ເໝາະສົມ ເພື່ອຮັບປະກັນການພັດທະນາ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງຢ່າງເຕັມສ່ວນ, ຄໍ້າປະກັນໃຫ້ເຂົາເຈົ້າໄດ້ປະຕິບັດ ແລະ ຊົມໃຊ້ສິດທິມະນຸດ ແລະ ອິດສະຫຼະພາບບົນພື້ນຖານຄວາມສະເໝີພາບກັບເພດຊາຍ.

– ລັດພາຄີຈະຕ້ອງນໍາໃຊ້ມາດຕະການພິເສດຊົ່ວຄາວ ເພື່ອແນໃສ່ເລັ່ງລັດໃຫ້ມີຄວາມສະເໝີພາບອັນແທ້ຈິງລະຫວ່າງຍິງ-ຊາຍ ຈະບໍ່ຖືວ່າເປັນການຈໍາແນກ ດັ່ງທີ່ໄດ້ນິຍາມໄວ້ໃນສົນທິສັນຍາສະບັບນີ້, ແຕ່ການປະຕິບັດດັ່ງກ່າວ ຕ້ອງບໍ່ນໍາມາເຊິ່ງຜົນຂອງການຮັກສາມາດຕະຖານທີ່ບໍ່ເທົ່າທຽມກັນ ຫຼື ແບ່ງແຍກກັນ; ມາດຕະການເຫຼົ່ານີ້ຕ້ອງສິ້ນສຸດລົງ ເມື່ອຈຸດປະສົງຂອງຄວາມສະເໝີພາບທາງດ້ານໂອກາດ ແລະ ການປະຕິບັດໄດ້ບັນລຸຜົນຕາມລະດັບຄາດໝາຍ.

– ລັດພາຄີຈະຕ້ອງນໍາເອົາທຸກມາດຕະການທີ່ເໝາະສົມ ເພື່ອກໍາຈັດຄວາມອະຄະຕິ, ຮີດຄອງປະເພນີ ແລະ ຊ່ວຍໃຫ້ເຂົາເຈົ້າຮັບຮູ້ຄວາມຮັບຜິດຊອບຮ່ວມກັນລະຫວ່າງຍິງ-ຊາຍ ໃນບົດບາດຂອງສັງຄົມ.

3.3 <u>ພາກທີ III</u>: ມາດຕາ **6-16:** ເນື້ອໃນຂອງສົນທິສັນຍາ ຊີດໍ ໃນຂົງເຂດຕ່າງໆ.

ລັດພາຄີຈະຕ້ອງນຳເອົາທຸກມາດຕະການທີ່ເໝາະສົມ ເພື່ອລົບລ້າງທຸກການຄ້າມະນຸດ ແລະ ການກົດຂີ່ຂູດຮີດທາງເພດຈາກການເປັນໂສເພນີ, ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍໃນທຸກດ້ານເປັນຕົ້ນແມ່ນ: ດ້ານຊີວິດການເມືອງ, ການຖືສັນຊາດ, ການສຶກສາ, ການມີວຽກເຮັດງານທຳ, ການເຂົ້າເຖິງ ແລະ ການຊົມໃຊ້ການບໍລິການດ້ານສາທາລະນະສຸກ ແລະ ດ້ານເສດຖະກິດ-ສັງຄົມ ພ້ອມທັງຮັບປະກັນໃຫ້ແມ່ຍິງ ໄດ້ຮັບສິດສະເໝີພາບ ຕໍ່ໜ້າກົດໝາຍ.

3.4 <u>ພາກທີ IV</u>: ມາດຕາ **17-23:** ຄະນະກຳມະການ ຊີດໍ (ສາກົນ) ແລະ ຂັ້ນຕອນຕ່າງໆ ທີ່ກ່ຽວຂ້ອງກັບຄະນະກຳມະການ.

- ຄະນະກຳມະການ ຊີດໍ ຈະຕ້ອງໄດ້ສ້າງຕັ້ງຂຶ້ນ ເຊິ່ງໃນເວລາສົນທິສັນຍາເລີ່ມມີຜົນບັງຄັບໃຊ້, ສະມາຊິກຂອງຄະນະກຳມະການ ຊີດໍ ໄດ້ມາຈາກການເລືອກຕັ້ງ; ເຊິ່ງການເລືອກຕັ້ງນີ້ຈະຖືກ ຈັດຂຶ້ນໃນກອງປະຊຸມລັດພາຄີ ແລະ ຖືກຮຽກໂຮມໂດຍເລຂາທິການໃຫຍ່ ສະຫະປະຊາຊາດ (ສປຊ) ແລະ ຈັດຂຶ້ນທີ່ສຳນັກງານໃຫຍ່ ສປຊ, ສະມາຊິກຈະຕ້ອງຖືກເລືອກຕັ້ງດ້ວຍການລົງຄະແນນສຽງແບບປິດລັບ.
- ໃນການເຂົ້າດຳລົງຕຳແໜ່ງຂອງສະມາຊິກ ແມ່ນຊຸດລະ 4 ປີ
- ຄະນະກຳມະການດັ່ງກ່າວມີພາລະບົດບາດໃນການພິຈາລະນາເບິ່ງຄວາມຄືບໜ້າໃນການຈັດຕັ້ງປະຕິບັດສົນທິສັນຍາ ຊີດໍ ຂອງລັດພາຄີ, ຄົ້ນຄ້ວາບັນດາບົດລາຍງານ ແລະ ບັນດາຂໍ້ມູນທີ່ໄດ້ຮັບຈາກລັດພາຄີ ແລ້ວລາຍງານຂໍ້ມູນດັ່ງກ່າວໃຫ້ ສປຊ ຫຼັງຈາກນັ້ນກໍຈະສົ່ງຕໍ່ໄປຍັງຄະນະກຳມາທິການວ່າດ້ວຍສະຖານະພາບຂອງ ແມ່ຍິງ (CSW).

3.5 <u>ມາດຕາ **24-30**</u>**:** ການບໍລິຫານຄຸ້ມຄອງ ແລະ ການຕີຄວາມໝາຍຕ່າງໆ.

- ສົນທິສັນຍາສະບັບນີ້ ຈະເປີດຮັບເອົາການເຂົ້າຮ່ວມ ແລະ ລົງນາມຂອງໝົດທຸກລັດພາຄີ.
- ເລຂາທິການໃຫຍ່ ສປຊ ໄດ້ ຖືກແຕ່ງຕັ້ງໃຫ້ເປັນຜູ້ຮັກສາສົນທິສັນຍາສະບັບນີ້.
- ທຸກລັດພາຄີມີສິດສະເໜີຂໍດັດແກ້ສົນທິສັນຍາສະບັບນີ້ໄດ້ທຸກເວລາ ໂດຍການແຈ້ງເປັນລາຍລັກອັກສອນໄປຍັງເລຂາທິການໃຫຍ່ ສປຊ.
- ເລຂາທິການໃຫຍ່ ສປຊ ຈະຕ້ອງໄດ້ຮັບ ແລະ ສົ່ງບົດບັນທຶກຂໍ້ສະຫງວນທີ່ລັດຕ່າງໆເຮັດຂຶ້ນ ໃນເວລາໃຫ້ສັດຕະຍາບັນ ຫຼື ສະເໜີເຂົ້າຮ່ວມເປັນລັດພາຄີນັ້ນໄປໃຫ້ລັດອື່ນຊາບ, ຂໍ້ສະຫງວນໃດທີ່ບໍ່ສອດຄ່ອງກັບເປົ້າໝາຍ ແລະ ຈຸດປະສົງຂອງສົນທິສັນຍາສະບັບນີ້ຈະບໍ່ອະນຸຍາດ ໃຫ້ເຮັດໄດ້.

## IV. <u>ຄຳຖາມເຈາະຈີ້ມ</u>

1. ອົງປະກອບຂອງສົນທິສັນຍາ ຊີດໍ ມີຫຍັງແດ່?
2. ເນື້ອໃນຂອງສົນທິສັນຍາ ຊີດໍ ມີຈັກມາດຕາ ແລະ ໄດ້ແບ່ງອອກເປັນຈັກພາກ?
3. ຈົ່ງໃຫ້ນິຍາມກ່ຽວກັບການຈຳແນກຕໍ່ແມ່ຍິງມີຄືແນວໃດ?
4. ແມ່ນໃຜເປັນຜູ້ພິຈາລະນາ ແລະ ຄົ້ນຄວ້າກ່ຽວກັບບົດລາຍງານຂອງແຕ່ລະລັດພາຄີ?
5. ແມ່ນໃຜເປັນຜູ້ຮັກສາສົນທິສັນຍາ ສະບັບນີ້?

## ກໍລະນີສຶກສາທີ 4: ກ່ຽວກັບການຈໍາແນກແມ່ຍິງ

ໃນໝູ່ບ້ານແຫ່ງໜຶ່ງ ກໍາລັງຊຸ້ນຊ້ຽວກັນຈັດແຈງສະຖານທີ່ ໃນການເລືອກຕັ້ງນາຍບ້ານຄົນໃໝ່, ການເລືອກຕັ້ງຄັ້ງນີ້ ແມ່ນເປັນທີ່ເວົ້າກັນຢ່າງກວ້າງຂວາງໃນບັນດາຊາວບ້ານເພາະວ່າປີນີ້ຈາກຜູ້ລົງຮັບສະໝັກເລືອກຕັ້ງນາຍບ້ານມີຜູ້ລົງຮັບສະໝັກຈໍານວນ 4 ຄົນ, ໃນນັ້ນມີແມ່ຍິງ 1 ຄົນ, ຊື່ຂອງເພິ່ນແມ່ນເປັນທີ່ຮູ້ຈັກກັນດີຂອງຊາວບ້ານ ໃຜໆກໍເອີ້ນເພິ່ນວ່າແມ່ສອນ ຊື່ແທ້ຂອງເພິ່ນແມ່ນນາງ ວິໄລ, ປີນີ້ເພິ່ນອາຍຸໄດ້ 46 ປີແລ້ວ; ແມ່ສອນເປັນຜູ້ຍິງຄົນໜຶ່ງ ທີ່ມີຄວາມຫ້າວຫັນໃນການອອກແຮງງານ, ຄອບຄົວຂອງເພິ່ນແມ່ນກຸ້ມຢູ່ກຸ້ມກິນ ແລະ ເພິ່ນມີຄວາມພຽນພະຍາຍາມ ໃນການສຶກສາອົບຮົມລູກເຕົ້າ ແລະ ລູກໆຂອງເພິ່ນແມ່ນໄດ້ເຂົ້າໂຮງຮຽນໝົດທຸກຄົນ ເຊິ່ງມີຊາວບ້ານຫຼາຍຄອບຄົວ ກໍໄດ້ເອົາຄອບຄົວຂອງແມ່ສອນເປັນແບບຢ່າງໃນການດໍາລົງຊີວິດ.

ໃນຈໍານວນຜູ້ລົງຮັບສະໝັກເລືອກຕັ້ງຄັ້ງນີ້ທຸກຄົນແມ່ນມີຄຸນສົມບັດບໍ່ຫຼຸດລື່ນກັນພໍປານໃດ, ເວົ້າເລື່ອງວິຊາສະເພາະແມ່ນບໍ່ມີໃຜຈົບວິຊາສະເພາະດ້ານໃດຈັກຄົນລວມທັງແມ່ສອນ, ແຕ່ໃນນັ້ນລຸງສີເຊິ່ງເປັນຜູ້ລົງຮັບສະໝັກເລືອກຕັ້ງຜູ້ໜຶ່ງທີ່ເປັນທີ່ເຄົາລົບນັບຖືຂອງຊາວບ້ານເຊັ່ນກັນ, ປີນີ້ລຸງອາຍຸໄດ້ 58 ປີແລ້ວ; ກ່ອນການເລືອກຕັ້ງ 3 ມື້ ນາຍບ້ານຜູ້ເກົ່າໄດ້ເອີ້ນບັນດາຊາວບ້ານມາປະຊຸມກັນ ເພື່ອເຜີຍແຜ່ກົດລະບຽບ, ຄຸນສົມບັດຂອງຜູ້ລົງຮັບສະໝັກ ແລະ ພ້ອມທັງ ເປັນການຢັ່ງຫາງສຽງຂອງຜູ້ລົງຮັບສະໝັກເລືອກຕັ້ງອີກດ້ວຍ, ຫຼັງຈາກປະຊຸມແລ້ວກໍມີຊາວບ້ານກຸ່ມໃຫຍ່ໜຶ່ງມີທັງຍິງ ແລະ ຊາຍ ພວມສົນທະນາກັນສຽງດັງຟົດສະໜັ່ນ ເຊິ່ງພວກເຂົາໄດ້ເວົ້າວ່າ: ປີນີ້ພວກເຮົາລອງເລືອກເອົາແມ່ຍິງເບິ່ງດຸ! ເບິ່ງຄືຊິເຮັດໃຫ້ບ້ານຂອງພວກເຮົາມີອັນປ່ຽນແປງຫຼາຍອັນ, ບາງຄົນກໍເວົ້າວ່າ: ເຮົາຈະເອົາແມ່ຍິງມາເປັນນາຍບ້ານໄດ້ຈັ່ງໃດ? ລາວມີວຽກຄອບຄົວຫຼາຍ, ຢ້ານບໍ່ມີເວລາຊິມາເວົ້າວຽກບ້ານວຽກເມືອງດອກ!, ຖ້າມີປະຊຸມຢູ່ເມືອງກໍໄກຜົວຂອງລາວ ກໍຄືຊິບໍ່ໃຫ້ໄປ, ການອອກຄໍາຄິດຄໍາເຫັນກໍຄືຊິບໍ່ໜັກແໜ້ນ, ຢ້ານບໍ່ກ້າອອກຄໍາຄິດຄໍາເຫັນຊໍ້າ, ຊໍ້າບໍ່ໜໍາຊິເຮັດໃຫ້ບ້ານເຮົານີ້ທີ່ເຄີຍເປັນບ້ານແບບຢ່າງໃນການພັດທະນາດີກັບກາຍເປັນບ້ານດ້ອຍພັດທະນາຊໍ້າອີກ; ບາງຄົນກໍເວົ້າຕື່ມອີກວ່າ: ເຮົາບໍ່ເຄີຍເຫັນຈັກເທື່ອວ່າມີຜູ້ຍິງເປັນນາຍບ້ານ, ແມ່ຍິງບໍ່ມີຄວາມສາມາດເປັນຜູ້ນໍາໄດ້ດອກ; ການສົນທະນາຂອງຊາວບ້ານດໍາເນີນໄປດົນເຕີບ, ແຕ່ພວກເຂົາກໍຫາຂໍ້ສະຫຼຸບໃນການສົນທະນາບໍ່ໄດ້ພວກເຂົາເລີຍທະຍອຍແຍກຍ້າຍກັນກັບເຮືອນຂອງໃຜລາວ.

ເມື່ອຮອດມື້ເລືອກຕັ້ງເຫັນວ່າຊາວບ້ານໄດ້ເອົາໃຈໃສ່ໃນການເລືອກຕັ້ງຄັ້ງນີ້ເຊິ່ງສະແດງອອກຄື: ມີຊາວບ້ານມາລົງຄະແນນສຽງຢ່າງຫຼວງຫຼາຍ, ເຮັດໃຫ້ການເລືອກຕັ້ງມີບັນຍາກາດຟົດຟື້ນດີພໍສົມຄວນ; ເມື່ອການລົງຄະແນນສຽງເລືອກຕັ້ງສິ້ນສຸດລົງຜົນອອກມາກໍປາກົດວ່າແມ່ນລຸງສີ ໄດ້ຮັບເລືອກຕັ້ງເປັນນາຍບ້ານ, ສ່ວນແມ່ສອນແມ່ນໄດ້ເປັນຮອງນາຍບ້ານຜູ້ທີສອງ; ຈາກຜົນຂອງການເລືອກຕັ້ງຄັ້ງນີ້ເຮັດໃຫ້ພວກເຮົາເຫັນວ່າ: ເຖິງແມ່ນວ່າລັດຖະບານຈະມີນະໂຍບາຍ ເພື່ອປັບປຸງການມີສ່ວນຮ່ວມຂອງແມ່ຍິງໃນການວາງແຜນ ແລະ ຂະບວນການຕ່າງໆຫຼາຍຂຶ້ນແລ້ວກໍ່ຕາມແຕ່ທາງດ້ານທັດສະນະຄວາມຄິດ, ຮີດຄອງປະເພນີ ກໍ່ຍັງເປັນບັນຫາໜຶ່ງທີ່ກີດໜ່ວງການມີສ່ວນຮ່ວມຂອງແມ່ຍິງໃນລະດັບຕ່າງໆຢູ່.

<u>ບົດຝຶກຫັດ:</u>

1. ທ່ານຄິດວ່າທັດສະນະຄວາມຄິດຂອງຊາວບ້ານທີ່ມີຕໍ່ແມ່ສອນນັ້ນເຫັນວ່າເປັນແນວໃດ?
2. ໃນຄຸນນະວຸດທິທີ່ບໍ່ຫຼຸດລື່ນກັນລະຫວ່າງ ລຸງສີ ແລະ ແມ່ສອນຄືແນວນີ້ ທ່ານຄິດວ່າຄວນເຮັດແນວໃດ ? ເພື່ອໃຫ້ຄວາມເປັນທໍາສໍາລັບແມ່ສອນ?
3. ຄວນມີມາດຕະການເພີ່ມເຕີມບໍ ? ເພື່ອປ່ຽນແປງທັດສະນະຄວາມຄິດການຈໍາແນກຕໍ່ແມ່ຍິງຄືແນວນີ້?

## ກໍລະນີສຶກສາທີ 5: ການປະຕິບັດສິດທິມະນຸດ ແລະ ອິດສະລະພາບຂອງແມ່ຍິງ

ນາງ ງາ ແຕ່ງງານກັບທ້າວ ໂງ່ນ ໄດ້ 6 ປີ, ມີລູກນຳກັນ 2 ຄົນ (ຜູ້ທີ 1 ອາຍຸ 5 ປີ, ຜູ້ທີ 2 ອາຍຸ 2 ປີ); ຕໍ່ມາທ້າວ ໂງ່ນ ໄດ້ມີພຶດຕິກຳປ່ຽນແປງການປະຕິບັດຕໍ່ລູກ ແລະ ເມຍ ໄດ້ມີການປ່ຽນໄປຈາກແຕ່ກ່ອນເຊິ່ງທ້າວ ໂງ່ນ ຫຼິ້ນສາວ, ມັກດ່າລູກ ແລະ ຕີເມຍ.

ນາງ ງາ ອົດບໍ່ໄດ້ຕໍ່ພຶດຕິກຳດັ່ງກ່າວ ຈຶ່ງໄປພົບຄະນະບ້ານ ເພື່ອຂໍຢ່າຮ້າງກັບ ທ້າວ ໂງ່ນ; ຄະນະບ້ານຈຶ່ງໄດ້ເອີ້ນທັງສອງຄົນມາພົບ ແລະ ໄດ້ສຶກສາອົບຮົມໃຫ້ທັງສອງອົດທົນຢູ່ນຳກັນ ແລະ ໃຫ້ທັງສອງເຮັດບົດບັນທຶກຮ່ວມກັນ ໂດຍຊ້ອງໜ້າຄະນະບ້ານວ່າຈະປ່ຽນແປງ ແລະ ຈະເຮັດແນວໃດໃຫ້ຊີວິດຄອບຄົວສະຫງົບ, ຢູ່ດີມີສຸກຮ່ວມກັນ.

ຢູ່ຕໍ່ມາທ້າວ ໂງ່ນ ກໍບໍ່ມີຫຍັງປ່ຽນແປງ, ຍິ່ງໄປກວ່ານັ້ນກໍມີການຜິດຖຽງກັນເລື້ອຍກວ່າເກົ່າ, ນາງ ງາ ໄດ້ຂໍແຍກຫ້ອງນອນກັບທ້າວ ໂງ່ນ, ເພາະຫວັງວ່າ ທ້າວ ໂງ່ນ ຈະຄິດໄດ້ວ່າຄວນເຮັດແນວໃດຕໍ່ໄປ ເພື່ອບໍ່ໃຫ້ມີການຢ່າຮ້າງກັນ; ທັງສອງໄດ້ແຍກຫ້ອງນອນກັນເຖິງ 1 ປີ, ແຕ່ກໍ່ບໍ່ມີຫຍັງດີຂຶ້ນເລີຍ ມີແຕ່ຮ້າຍແຮງຂຶ້ນກວ່າເກົ່າ.

ໃນທີ່ສຸດ, ນາງ ງາ ຈຶ່ງຕັດສິນໃຈເດັດຂາດຢ່າຮ້າງກັບ ທ້າວ ໂງ່ນ ໄດ້ໄປຮ້ອງຟ້ອງຕໍ່ສານ ເພື່ອຂໍຢ່າຮ້າງ, ສານກໍໄດ້ໃຫ້ໄປພົບກັບໜ່ວຍໄກ່ເກ່ຍກ່ອນ ແລະ ໜ່ວຍໄກ່ເກ່ຍກໍໄດ້ເຊີນ ທ້າວ ໂງ່ນ ແລະ ນາງ ງາ ໄປພົບເພື່ອຊ້ອງໜ້າກັນ ຕໍ່ໜ້າຄະນະໄກ່ເກ່ຍວ່າ: ທັງສອງຈະຢ່າຮ້າງກັນ; ໂດຍອີງຕາມກົດໝາຍຄອບຄົວແລ້ວ ຄະນະໄກ່ເກ່ຍຈຶ່ງໄດ້ສຶກສາອົບຮົມທັງສອງ ໃຫ້ຢູ່ຮ່ວມກັນໄປອີກກ່ອນ, ທັງສອງກໍໄດ້ກັບໄປຢູ່ນຳກັນແຕ່ໄລຍະທີ່ຢູ່ນຳກັນນີ້ນາງ ງາ ໄດ້ຕົກຢູ່ໃນຄວາມສ່ຽງທີ່ເປັນອັນຕະລາຍ ເພາະ ທ້າວ ໂງ່ນ ໃຊ້ອາລົມທີ່ຮຸນແຮງ ແລະ ປ້ອຍດ່າ, ດູຖູກ ແລະ ຂົ່ມຂູ່ຕ່າງໆນາໆ.

ນັບແຕ່ນັ້ນມາ, ນາງ ງາ ກໍໄດ້ໄປຫາສານອີກ ເພື່ອຂໍຮ້ອງຟ້ອງຕໍ່ສານຂໍຢ່າຮ້າງ, ເນື່ອງຈາກບໍ່ສາມາດຢູ່ນຳກັນໄດ້, ສານຈຶ່ງໄດ້ພິຈາລະນາ ແລະ ເຫັນດີໃຫ້ມີການຢ່າຮ້າງກັນໂດຍໃຫ້ ທ້າວ ໂງ່ນ ອອກຈາກເຮືອນ, ແລະ ນາງ ງາໂດຍລູກທັງສອງ ໃຫ້ຢູ່ນຳ ນາງ ງາ, ທ້າວ ໂງ່ນ ກໍມີຄວາມຮັບຜິດຊອບຮ່ວມກັນໃນການດູແລລູກຈົນບັນລຸນິຕິພາວະ.

**<u>ບົດເຝິກຫັດ:</u>**

1. ກໍລະນີນີ້ ນາງ ງາ ຖືກຈຳແນກແນວໃດ?
2. ສິດຂອງລາວຖືກລະເມີດດ້ານໃດແດ່?
3. ທ່ານຈະອະທິບາຍ ກໍລະນີແບບນີ້ແນວໃດແດ່ ໂດຍອີງຕາມຂອບຂອງ ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (ຊີດໍ) ທີ່ທ່ານ ຮູ້?

## ກໍລະນີສຶກສາທີ 6: ຍິງ-ຊາຍຕ້ອງໄດ້ຮັບຄວາມສະເໝີພາບຕໍ່ໜ້າກົດໝາຍ.

ພະນັກງານທີ່ເຮັດວຽກພັດທະນາຊຸມຊົນຄົນໜຶ່ງ ພ້ອມກັບພະນັກງານຈາກສະຫະພັນແມ່ຍິງໄດ້ເດີນທາງໄປເຮັດວຽກຢູ່ບ້ານຊົນເຜົ່າແຫ່ງໜຶ່ງ; ພະນັກງານທັງສອງໄດ້ນອນຄ້າງຄືນຢູ່ບ້ານນັ້ນ 1 ຄືນ, ຕົກກາງເດິກມາພວກເຂົາໄດ້ຍິນສຽງແມ່ຍິງຮ້ອງໄຫ້ ແລະ ໄດ້ຍິນສຽງທຸບຕີ ພ້ອມກັບສຽງປ້ອຍດ່າ; ເມື່ອໄດ້ຍິນແນວນັ້ນພະນັກງານທັງສອງຈຶ່ງໄດ້ອອກມາຖາມເຈົ້າຂອງເຮືອນບ່ອນທີ່ພະນັກງານພັກຢູ່ວ່າ: ເກີດຫຍັງຂຶ້ນນໍ? ບໍ່ແມ່ນຜົວຕີເມຍບໍ ?, ເຈົ້າຂອງເຮືອນເລີຍຕອບວ່າ: ແມ່ນແລ້ວຜົວຕີເມຍ, ລາວຕີເມຍເລື້ອຍໆ.

ເມື່ອເຫດການເປັນແນວນັ້ນ, ພະນັກງານພັດທະນາຊົນນະບົດຈຶ່ງບອກພະນັກງານສະຫະພັນແມ່ຍິງວ່າ: ເຈົ້າຊ່ວຍໄປບອກໃຫ້ຜູ້ຊາຍຄົນນັ້ນ ໃຫ້ເຊົາຕີເມຍລາວສະ! ແຕ່ພະນັກງານສະຫະພັນແມ່ຍິງ ແລະ ເຈົ້າຂອງເຮືອນ (ທັງຜົວ ແລະ ເມຍ) ໄດ້ບອກວ່າ: "ເຮົາໄປຫ້າມບໍ່ໄດ້, ເພາະຜູ້ຊາຍຄົນນັ້ນຈະບອກວ່າ: ແມ່ນເລື່ອງພາຍໃນຄອບຄົວຂອງເຂົາ; ຍິ່ງໄປກວ່ານັ້ນ, ຜູ້ຊາຍຄົນນັ້ນຈະຫາວ່າເມຍມີຊູ້ຊໍ້າເນື່ອງຈາກມີຄົນມາຊ່ວຍ"; ເຈົ້າຂອງເຮືອນຍັງເລົ່າຕໍ່ໄປວ່າມັນເປັນເລື່ອງທຳມະດາຊໍ້າ ສຳລັບເຜົ່າຂອງເຂົາເຈົ້າເພາະຜູ້ຊາຍຊື້ເມຍມາແພງແລ້ວ (ໝູ 3 ໂຕ, ງົວ 1 ໂຕ, ຫຼັງຈາກແຕ່ງງານແລ້ວ ເມຍບໍ່ມີສິດຫຍັງໃນຄອບຄົວ/ເປັນຄືວັດຖຸທີ່ຜົວເປັນເຈົ້າຂອງ).

**ບົດເຝິກຫັດ:**

1. ແມ່ຍິງຜູ້ຖືກທຸບຕີນັ້ນ, ຖືກລະເມີດສິດທິດ້ານໃດແດ່?
2. ທ່ານຈະອະທິບາຍກໍລະນີແບບນີ້ແນວໃດແດ່? ໂດຍອີງຕາມຂອບຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກ ຮູບການຈຳແນກຕໍ່ແມ່ຍິງ (ຊີດໍ) ທີ່ທ່ານຮູ້ ?

# ບົດທີ IV
## ການຈັດຕັ້ງປະຕິບັດ ແລະ ຂັ້ນຕອນການຂຽນບົດລາຍງານແຫ່ງຊາດສົນທິສັນຍາ ຊີດໍ

**I. ຈຸດປະສົງ**

- ເພື່ອໃຫ້ວິທະຍາກອນ ຫຼື ຜູ້ບັນລະຍາຍ ສາມາດອະທິບາຍກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ ຊີດໍ ຕາມທີ່ໄດ້ລະບຸໄວ້ໃນສົນທິສັນຍາ ຊີດໍ
- ອະທິບາຍໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ ແລະ ກໍາໄດ້ຫຼັກການໃນການຈັດຕັ້ງປະຕິບັດລວມເຖິງຂັ້ນຕອນການຂຽນບົດລາຍງານແຫ່ງຊາດ ໃນການຈັດຕັ້ງປະຕິບັດ ສົນທິສັນຍາ ຊີດໍ.
- ເພື່ອໃຫ້ຜູ້ເຂົ້າຮ່ວມຮູ້ພາລະບົດບາດຂອງຕົນໃນການຈັດຕັ້ງຜັນຂະຫຍາຍສົນທິສັນຍາ ຊີດໍ.

**II. ວິທີການ**

- ນັກວິທະຍາກອນບັນລະຍາຍກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ ຊີດໍ ໂດຍທົ່ວໄປ.
- ອະທິບາຍລະອຽດກ່ຽວກັບການຈັດຕັ້ງປະຕິບັດ ແລະ ຂັ້ນຕອນການຂຽນບົດລາຍງານສົນທິສັນຍາ ຊີດໍ ໃນ ສປປ ລາວ.
- ປະເມີນຜົນກ່ຽວກັບການບັນລະຍາຍຂອງຕົນ, ຜູ້ບັນຍາຍຕ້ອງນໍາພາຜູ້ເຂົ້າຮ່ວມເຮັດກິດຈະກໍາ ເຊັ່ນ: ການຕອບຄໍາຖາມເຈາະຈົ້ມກ່ຽວກັບບົດ ແລະ ຍົກຫົວຂໍ້ໃດໜຶ່ງໃນບົດຂຶ້ນມາສົນທະນາ ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຄົ້ນຄິດກ່ຽວກັບບົດເປັນຕົ້ນ ແມ່ນພັນທະຂອງລັດພາຄີທີ່ຕ້ອງຈັດຕັ້ງປະຕິບັດຕໍ່ສົນທິສັນຍາ ຊີດໍ.

## III. ເນື້ອໃນ

### 1. ການຈັດຕັ້ງປະຕິບັດສົນທິສັນຍາ ຊີດໍ ຕາມພັນທະຂອງລັດພາຄີ

ທຸກໆລັດພາຄີທີ່ເຂົ້າຮ່ວມ, ລົງນາມຕໍ່ສົນທິສັນຍາ ຊີດໍ ຕ້ອງຮັບປະກັນວ່າຈະສົ່ງບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດສົນທິສັນຍາ ຊີດໍ ໄປຍັງເລຂາທິການໃຫຍ່ ສປຊ ທຸກໆ 4 ປີ ເພື່ອ ໃຫ້ຄະນະກໍາມະການພິຈາລະນາ, ໃນບົດລາຍງານດັ່ງກ່າວຈະຕ້ອງລາຍງານ ກ່ຽວກັບມາດຕະການດ້ານນິຕິບັນຍັດ, ຕຸລາການ, ບໍລິຫານ ຫຼື ມາດຕະການອື່ນໆ ທີ່ຕົນໄດ້ໃຊ້ໃນການຈັດຕັ້ງປະຕິບັດສົນທິສັນຍາສະບັບນີ້ໃຫ້ປະກົດຜົນເປັນຈິງ.

ບົດລາຍງານແຫ່ງຊາດຂອງລັດພາຄີນັ້ນ ຈະຊີ້ໃຫ້ເຫັນບັນດາປັດໃຈ ແລະ ຄວາມຫຍຸ້ງຍາກທີ່ສົ່ງຜົນກະທົບໃນມາດຕະການ ໃນການຈັດຕັ້ງປະຕິບັດພັນທະຕາມສົນທິສັນຍາສະບັບນີ້.

## 2. ການຈັດຕັ້ງປະຕິບັດສົນທິສັນຍາ ຊີດໍ ຢູ່ ສປປ ລາວ

ພາຍຫຼັງທີ່ ສປປ ລາວ ໄດ້ໃຫ້ ສັດຕະຍາບັນຕໍ່ສົນທິສັນຍາ ຊີດໍ ໃນປີ 1981 ແລ້ວ, ລັດຖະບານ ກໍໄດ້ດຳເນີນຕາມພາລະບົດບາດຂອງຕົນຢ່າງຕັ້ງໜ້າ ແຕ່ຍ້ອນບໍ່ທັນມີບົດຮຽນ, ຈົນມາຮອດປີ 2002 ສປປ ລາວ ຈຶ່ງໄດ້ສົ່ງບົດລາຍງານສະບັບທຳອິດເຊິ່ງກວມເອົາໄລຍະທີ 1 ເຖິງໄລຍະທີ 5 ຢູ່ໃນເອກະສານສະບັບດຽວກັນ; ບົດລາຍງານດັ່ງກ່າວນີ້ ເປັນບາດກ້າວທຳອິດໃນການທົບທວນຕີລາຄາຄືນສະພາບການຈັດຕັ້ງປະຕິບັດສົນທິສັນຍາ ຊີດໍ ໃນທຸກຂົງເຂດວຽກງານ ໂດຍຕິດພັນກັບແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ, ພ້ອມທັງຊຸກຍູ້ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳໃຫ້ແກ່ແມ່ຍິງໃນທຸກດ້ານ: ການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ ຕາມແນວທາງນະໂຍບາຍຂອງລັດຖະບານ.

ຕາມທຳມະດາແລ້ວ ພາຍຫຼັງເຂົ້າເປັນລັດພາຄີຂອງສົນທິສັນຍາ ຊີດໍ 2 ປີທຳອິດ ລັດພາຄີຕ້ອງສົ່ງບົດລາຍງານການຈັດຕັ້ງປະຕິບັດສົນທິສັນຍາດັ່ງກ່າວຕໍ່ຄະນະກຳມະການ ຊີດໍ ສາກົນ ແລະ ທຸກໆ 4 ປີຕ້ອງໄດ້ສົ່ງບົດລາຍງານເທື່ອໜຶ່ງ; ແຕ່ໃນໄລຍະຜ່ານມາ ສປປ ລາວໄດ້ສົ່ງບົດລາຍງານສະບັບທຳອິດ ເຊິ່ງກວມເອົາ 5 ໄລຍະ ໃນປີ 2002; ແລະ ໃນປີ 2006 ຈະຕ້ອງສົ່ງບົດລາຍງານສະບັບທີ 2 ເຊິ່ງກວມ ເອົາ 2 ໄລຍະຄື: ໄລຍະທີ 6 ແລະ 7.

ພາຍຫຼັງທີ່ ສປປ ລາວ ໄດ້ສົ່ງບົດລາຍງານສະບັບທຳອິດ ແລະ ໄດ້ຖືກພິຈາລະນາໂດຍຄະນະກຳມະການ ຊີດໍ ສາກົນໃນກອງປະຊຸມຄັ້ງທີ 32 ໃນວັນທີ 19 ມັງກອນ 2005, ທີ່ນິວຢອກ, ສະຫະລັດອາເມລິກາ, ໃນກອງປະຊຸມຄັ້ງນັ້ນ ຄະນະຜູ້ແທນແຫ່ງ ສປປ ລາວ ກໍໄດ້ເຂົ້າຮ່ວມເພື່ອຮັບຟັງການພິຈາລະນາ ແລະ ໄດ້ຊີ້ແຈງ, ອະທິບາຍ ແລະ ຕອບຄຳຖາມເຈາະຈີ້ມຈຳນວນ 42 ຂໍ້ ເຊິ່ງໃນຄຳຖາມເຫຼົ່ານັ້ນ ແມ່ນຄຳຖາມເພີ່ມເຕີມຈາກບົດລາຍງານ ເພື່ອເຮັດໃຫ້ຂໍ້ມູນທີ່ປະກອບໃສ່ບົດລາຍງານດັ່ງກ່າວກະຈ່າງແຈ້ງຕື່ມ, ຫຼັງຈາກກອງປະຊຸມຄັ້ງນັ້ນສຳເລັດລົງ, ສປປ ລາວ ກໍໄດ້ຮັບບົດປະກອບຄຳເຫັນມ້ວນທ້າຍຈາກຄະນະກຳມະການ ຊີດໍ ສາກົນ ຄັ້ງວັນທີ 28 ມັງກອນ 2005.

ບົດປະກອບຄຳເຫັນມ້ວນທ້າຍ ແມ່ນບົດສະຫຼຸບໂດຍຫຍໍ້ຂອງຄະນະກຳມະການ ຊີດໍ ສາກົນ ທີ່ມີຄຳເຫັນມ້ວນທ້າຍ ແລະ ຂໍ້ສະເໜີແນະຕໍ່ບົດລາຍງານແຫ່ງຊາດຂອງລັດພາຄີ ພາຍຫຼັງທີ່ໄດ້ພິຈາລະນາບົດລາຍງານດັ່ງກ່າວແລ້ວ.

ສຳລັບ ສປປ ລາວ ແມ່ນໄດ້ຮັບບົດປະກອບຄຳເຫັນມ້ວນທ້າຍ ແລະ ຂໍ້ສະເໜີແນະຈາກຄະນະກຳມະການ ຊີດໍ ສາກົນ ປະກອບມີ **2** ສ່ວນຄື: ດ້ານຕັ້ງໜ້າ ແລະ ຂົງເຂດທີ່ໜ້າເປັນຫວ່ງເຊິ່ງມີທັງໝົດ 48 ຂໍ້

– ດ້ານຕັ້ງໜ້າ: ຄະນະກຳມະການ ຊີດໍ ສາກົນ ໄດ້ຍ້ອງຍໍສັນລະເສີນຕໍ່ ສປປ ລາວ ທີ່ໄດ້ໃຫ້ສັດຕະຍາບັນຕໍ່ສົນທິສັນຍາ ຊີດໍ ໂດຍບໍ່ມີຂໍ້ສະຫງວນໃດໆ ແລະ ມີຄວາມພະຍາຍາມໃນການຈັດຕັ້ງປະຕິບັດ, ພ້ອມດຽວກັນ ຄະນະກຳມະການ ຊີດໍ ສາກົນ ຍັງໄດ້ຊົມເຊີຍ ແລະ ຕີລາຄາສູງ ຕໍ່ການສ້າງຕັ້ງ ຄ.ກ.ມ.ຊ ໃນປີ 2003, ການຮັບ ຮອງເອົາກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ ໃນປີ 2004, ການເພີ່ມອັດຕາສ່ວນແມ່ຍິງຢູ່ໃນສະພາແຫ່ງຊາດຢ່າງຫຼວງຫຼາຍ ແລະ ບັນດາຄວາມພະຍາຍາມໃນການຕ້ານການຄ້າແມ່ຍິງ ແລະ ເດັກນ້ອຍ.

- ຂົງເຂດທີ່ໜ້າເປັນຫ່ວງ ແລະ ຂໍ້ສະເໜີແນະນິຕິ: ການຈັດຕັ້ງປະຕິບັດສົນທິສັນຍາ ແລະ ບົດປະກອບຄຳເຫັນມ້ວນທ້າຍ, ລະບົບນິຕິກຳພາຍໃນ, ໂຄງປະກອບການຈັດຕັ້ງຂອງຄ.ກ.ມ.ຊ, ການປັບປຸງ ແລະ ແກ້ໄຂຄວາມທຸກຍາກທີ່ເປັນສາຍເຫດໃຫ້ແມ່ຍິງຂາດໂອກາດໃນການມີສ່ວນຮ່ວມໃນຫຼາຍດ້ານ.

- <u>ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດສົນທິສັນຍາ ຊີດໍ ໃນ ສປປ ລາວ ໃຫ້ປະກົດຜົນເປັນຈິງຄວນດຳເນີນໄປດັ່ງນີ້:</u>

- ໃນການຈັດຕັ້ງປະຕິບັດສົນທິສັນຍາ ຊີດໍ ແລະ ບົດປະກອບຄຳເຫັນມ້ວນທ້າຍນັ້ນ ມັນຮຽກຮ້ອງໃຫ້ມີການປັບປຸງກົນໄກປະສານງານພາຍໃນປະເທດ ລະຫວ່າງ ບັນດາຂະແໜງການຕ່າງໆຂອງລັດຖະບານ, ບັນດາອົງການຈັດຕັ້ງສັງຄົມ, ບັນດາອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ໃຫ້ມີຄວາມເຂົ້າໃຈຕໍ່ສົນທິສັນຍາ ແລະ ບົດປະກອບຄຳເຫັນມ້ວນທ້າຍ.
- ທຸກພາກສ່ວນຕ້ອງເອົາໃຈໃສ່ ກຳນົດນະໂຍບາຍ, ແຜນຍຸດທະສາດ ໃນການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ມີໂອກາດພັດທະນາຕົນເອງໃຫ້ມີຄວາມກ້າວໜ້າ ພ້ອມທັງແກ້ໄຂສະພາບການຫຼຸດໂຕນກັນ ແລະ ຄວາມບໍ່ສະເໝີພາບກັນລະຫວ່າງຍິງ-ຊາຍ.
- ການຮ່ວມມືກັນໃນຂົງເຂດອາຊຽນກໍຄືພາກພື້ນ ແລະ ໃນໂລກເປັນປັດໃຈສຳຄັນໃນການຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນທຸກດ້ານເປັນຕົ້ນດ້ານວິຊາການ, ພົວພັນປະສານງານ, ການແລກປ່ຽນຂໍ້ມູນຂ່າວສານ ແລະ ການກຳນົດມາດຕະການຕ່າງໆລະຫວ່າງປະເທດສະມາຊິກ ເຊິ່ງຄວນສືບຕໍ່ປະຕິບັດຢ່າງຕໍ່ເນື່ອງ ເພື່ອພ້ອມກັນຜ່ານຜ່າອຸປະສັກ ແລະ ສິ່ງທ້າທາຍກໍຄືການບັນລຸເປົ້າໝາຍຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ.

## 3. <u>ຂັ້ນຕອນການຂຽນບົດລາຍງານແຫ່ງຊາດ:</u>

- ແຕ່ງຕັ້ງຄະນະຮັບຜິດຊອບກະກຽມບົດລາຍງານຂຶ້ນເຊິ່ງຄະນະດັ່ງກ່າວມີໜ້າທີ່ໃນການວາງແຜນກ່ຽວກັບໂຄງຮ່າງ ແລະ ເນື້ອໃນຂອງບົດລາຍງານແຫ່ງຊາດ.
- ຈັດຕັ້ງກອງປະຊຸມກວດຜ່ານເນື້ອໃນ ເພື່ອໃຫ້ມີຄວາມຖືກຕ້ອງ ແລະ ແທດເໝາະກັບສະພາບຄວາມເປັນຈິງ.
- ຄະນະລັດຖະບານກວດກາບັນດາເນື້ອໃນສຸດທ້າຍ ທີ່ເປັນພາສາລາວແລ້ວເຊັນຮັບຮອງເອົາບົດລາຍງານສະບັບດັ່ງກ່າວແລ້ວຈຶ່ງສົ່ງໃຫ້ກະຊວງການຕ່າງປະເທດ ເພື່ອແປເປັນພາສາອັງກິດ ແລະ ສົ່ງໃຫ້ຄະນະກຳມະການ ຊີດໍ ສາກົນ ໃນຂັ້ນຕໍ່ໄປ.

- <u>ສິ່ງທີ່ຄວນເອົາໃຈໃສ່ໃນການຂຽນບົດລາຍງານແຫ່ງຊາດ</u>

- ຄວາມເປັນເຈົ້າການຂອງທຸກຂະແໜງການໃນການຈັດຕັ້ງປະຕິບັດກໍຄືການສະຫຼຸບສັງລວມການຈັດຕັ້ງປະຕິບັດສົນທິສັນຍາ ຊີດໍ ຍັງບໍ່ທັນສູງເຮັດໃຫ້ຂະບວນການຂຽນບົດລາຍງານຊັກຊ້າບໍ່ແທດເໝາະກັບໄລຍະຕົວຈິງ, ດັ່ງນັ້ນ ແຕ່ລະຂະແໜງການຄວນເປັນເຈົ້າການຕື່ມ.
- ການໂຄສະນາເຜີຍແຜ່ເນື້ອໃນສົນທິສັນຍາ ຊີດໍ ໃຫ້ ຄ.ກ.ມ.ຊ ແຕ່ລະຂັ້ນ ກໍຄືໃຫ້ທົ່ວສັງຄົມໂດຍສະເພາະໃນເຂດຫ່າງໄກສອກຫຼີກຍັງບໍ່ທັນກ້ວາງຂວາງ, ສົມຄວນເພີ່ມທະວີການຜັນຂະຫຍາຍໃຫ້ທົ່ວເຖິງ ແລະ ກວ້າງຂວາງຕື່ມ.

- ຍັງຂາດພະນັກງານທີ່ມີຄວາມຮູ້, ຄວາມຊຳນານ ແລະ ປະສົບການໃນການຈັດຕັ້ງປະຕິບັດ, ຕິດຕາມກວດກາ ກໍຄືການຂຽນບົດລາຍງານສົນທິສັນຍາ ຊີດໍ, ບັນຫາດັ່ງກ່າວ ຄວນໄດ້ຮັບການປັບປຸງຂຶ້ນຕື່ມ
- ປັບປຸງກົນໄກການປະສານງານລະດັບຂົງເຂດ, ພາກພື້ນ ແລະ ໃນໂລກ.
- ເນື້ອໃນຫຼັກການໃນການຂຽນບົດລາຍງານ. (ມີເອກະສານຄັດຕິດມາພ້ອມນີ້).

## IV. ຄຳຖາມເຈາະຈີ້ມ

1. ໃນບົດລາຍງານແຫ່ງຊາດຂອງແຕ່ລະລັດພາຄີທີ່ມີພັນທະຕໍ່ສົນທິສັນຍາຊີດໍນັ້ນ ຈະຕ້ອງພົວພັນເຖິງຂົງເຂດໃດແດ່ ?
2. ສປປ ລາວໄດ້ສົ່ງບົດລາຍງານແຫ່ງຊາດ ໃນການຈັດຕັ້ງປະຕິບັດສົນທິສັນຍາ ຊີດໍ ຈັກສະບັບແລ້ວ ? ປະກອບມີຈັກໄລຍະ ?
3. ບົດປະກອບຄຳເຫັນມ້ວນທ້າຍແມ່ນຫຍັງ ? ບົດປະກອບຄຳເຫັນມ້ວນທ້າຍທີ່ ສປປ ລາວ ໄດ້ຮັບປະກອບມີຈັກສ່ວນ? ມີຈັກຂໍ້ ?
4. ຂັ້ນຕອນໃນການຂຽນບົດລາຍງານແຫ່ງຊາດມີຈັກຂັ້ນຕອນ ? ຢາກເຮັດໃຫ້ການຂຽນບົດລາຍງານໄດ້ຮັບຜົນດີຄວນເອົາໃຈໃສ່ບັນຫາໃດແດ່?

## ຄວາມໝາຍຂອງຄຳສັບ

- **ສົນທິສັນຍາສາກົນແມ່ນຫຍັງ ?**

ໝາຍເຖິງຂໍ້ຕົກລົງລະຫວ່າງປະເທດເຊິ່ງປະເທດໃດໜຶ່ງໄດ້ສ້າງຂຶ້ນເປັນລາຍລັກອັກສອນກັບຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ ຫຼື ນິຕິບຸກຄົນອື່ນໆຂອງກົດໝາຍລະຫວ່າງປະເທດ.

- **ສົນທິສັນຍາສາກົນ ມີຈັກຮູບແບບ ?**

ສົນທິສັນຍາສາກົນລວມມີສົນທິສັນຍາ, ສັນຍາ, ກະຕິກາສັນຍາ, ອານຸສັນຍາ, ບົດບັນທຶກຄວາມເຂົ້າໃຈ, ຈົດໝາຍແລກປ່ຽນ ແລະ ຂໍ້ຕົກລົງລະຫວ່າງປະເທດ, ສົນທິສັນຍາທີ່ສ້າງຂຶ້ນລະຫວ່າງປະເທດ; ສົນທິສັນຍາທີ່ສ້າງຂຶ້ນລະຫວ່າງສອງລັດ ຫຼື ສອງຝ່າຍ ເອີ້ນວ່າ: ສົນທິສັນຍາສາກົນທະວິພາຄີ, ແລະ ສົນທິສັນຍາທີ່ສ້າງຂຶ້ນລະຫວ່າງຫຼາຍລັດ ຫຼື ຫຼາຍຝ່າຍ ເອີ້ນວ່າ: ສົນທິສັນຍາສາກົນພະຫຸພາຄີ.

- **ການສ້າງສົນທິສັນຍາສາກົນເຮັດຄືແນວໃດ?**

ແມ່ນອົງການທີ່ມີສິດອຳນາດຂອງລັດດຳເນີນການສ້າງເອກະສານທາງດ້ານກົດໝາຍ ທີ່ເລີ່ມຈາກການເຈລະຈາ, ການລົງນາມ, ການໃຫ້ສັດຕະຍາບັນ, ການຮັບຮອງ, ການເຫັນດີ ຫຼື ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສາກົນຈົນເຖິງວັນເວລາມີຜົນບັງຄັບໃຊ້ຂອງເອກະສານດັ່ງກ່າວ.

- **ການໃຫ້ສັດຕະຍາບັນແມ່ນຫຍັງ?**

ແມ່ນການທີ່ສະພາແຫ່ງຊາດຕົກລົງ ແລະ ປະທານປະເທດປະກາດກ່ຽວກັບການສະແດງຄວາມຍິນຍອມຂອງລັດທີ່ຈະຮັບປະຕິບັດຂໍ້ຜູກພັນຕາມສົນທິສັນຍາທີ່ໄດ້ລົງນາມໂດຍຜູ້ຕາງໜ້າຂອງລັດຖະບານທີ່ບັນດາປະເທດຈະເຂົ້າຮ່ວມເປັນພາຄີ.

- **ລັດພາຄີແມ່ນຫຍັງ?**

ແມ່ນລັດເຊິ່ງຍິນຍອມທີ່ຈະເຂົ້າຜູກພັນຕາມສົນທິສັນຍາສາກົນ ແລະ ສົນທິສັນຍາດັ່ງກ່າວໄດ້ມີຜົນບັງຄັບໃຊ້ຕໍ່ລັດນັ້ນແລ້ວ.

- **ສິດທິມະນຸດແມ່ນຫຍັງ?:**

ສິດທິມະນຸດແມ່ນຫຼັກຄໍ້າປະກັນກຽດສັກສີ ແລະ ຄຸນຄ່າຂອງ ຄວາມເປັນມະນຸດຂອງມວນມະນຸດທີ່ເກີດຂຶ້ນທຸກແຫ່ງຫົນຂອງໂລກ; ກຽດ ແລະ ສັກສີແມ່ນມະໂນທຳ, ຈະຣິຍະທຳຂອງມວນມະນຸດ ເຊິ່ງບໍ່ພຽງແຕ່ຈະເກີດຈາກການເຄົາລົບນັບຖື, ຄວາມປາດຖະໜາທີ່ດີຕໍ່ກັນ ແລະ ກັນ, ສະພາບແວດລ້ອມ ຫຼື ແນວທາງນະໂຍບາຍການເມືອງ.

- **ສິດທິມະນຸດຂອງແມ່ຍິງແມ່ນຫຍັງ ?**

ແມ່ຍິງທຸກຄົນຕ້ອງໄດ້ຮັບສິດ, ເສລີພາບ ແລະ ຄວາມສະເໝີພາບທີ່ເທົ່າທຽມກັບເພດຊາຍໃນທຸກດ້ານໂດຍບໍ່ມີໃຜທີ່ຈະລ່ວງລະເມີດໄດ້.

- **ການຈຳແນກຕໍ່ແມ່ຍິງແມ່ນຫຍັງ ?**

ການຈຳແນກແມ່ຍິງໝາຍເຖິງທຸກການແບ່ງແຍກ, ການກີດກັ້ນບໍ່ໃຫ້ເຂົ້າຮ່ວມ ຫຼື ການຈຳກັດດ້ວຍເຫດຜົນທາງເພດ, ເຊິ່ງມີຜົນ ຫຼື ຈຸດປະສົງແຕະຕ້ອງ ຫຼື ປະຕິເສດການຮັບຮູ້, ການຊົມໃຊ້ ຫຼື ການປະຕິບັດສິດທິມະນຸດ ແລະ ອິດສະຫຼະພາບຂອງແມ່ຍິງໃນດ້ານ ການເມືອງ, ເສດຖະກິດ, ສັງຄົມ, ວັດທະນະທຳ, ພົນລະເຮືອນ ແລະ ດ້ານອື່ນໆ ໂດຍບໍ່ຖືວ່າວ່າຈະເປັນໂສດ ຫຼື ບໍ່ກໍຕາມ ແລະ ບົນພື້ນ ຖານຄວາມສະເໝີພາບຂອງຍິງ ແລະ ຊາຍ.

- **ແນວຄວາມຄິດກະແສຫຼັກແມ່ນຫຍັງ ?**

ແມ່ນແນວຄວາມຄິດຕົ້ນຕໍຕໍ່ບັນຫາໃດໜຶ່ງ.

- **ອິດສະຫຼະພາບແມ່ນຫຍັງ ?**

ແມ່ນການໃຫ້ສິດ, ເສລີພາບ ແລະ ຄວາມສະເໝີພາບເຊັ່ນ:ການດຳລົງຊີວິດທົ່ວໄປ ແລະ ການມີສ່ວນຮ່ວມໃນທຸກ ຂົງເຂດວຽກງານ.

- **ມາດຕະການພິເສດຊົ່ວຄາວແມ່ນຫຍັງ?**

ແມ່ນມາດຕະການທີ່ສ້າງຂຶ້ນມາຊົ່ວຄາວແນໃສ່ເລັ່ງລັດໃນການບັນລຸຈຸດປະສົງໃດໜຶ່ງ ແລະ ຈະສິ້ນສຸດລົງເມື່ອໄດ້ບັນລຸຜົນຕາມລະດັບຄາດໝາຍ.

# ເອກະສານອ້າງອີງ


1. ປຶ້ມປະມວນສົນທິສັນຍາສາກົນ, ກົມສົນທິສັນຍາ ແລະ ກົດໝາຍ, ກະຊວງການຕ່າງປະເທດ (ເຫຼັ້ມ I), ສະບັບປີ 1999.
2. ປຶ້ມສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ສູນຂໍ້ມູນຂ່າວສານບົດບາດຍິງຊາຍເພື່ອການພັດທະນາ, ສູນກາງສະຫະພັນແມ່ຍິງລາວ, ສະບັບປີ 2003.
3. ປຶ້ມການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ , ສະບັບພິມເທື່ອທຳອິດ ປີ 2005.
4. ປຶ້ມບົດປະກອບຄຳເຫັນມ້ວນທ້າຍຂອງຄະນະກຳມະການ ຊີດໍ, ຄັ້ງວັນທີ 28 ມັງກອນ 2005, ອົງການ UNIFEM.
5. ບົດລາຍງານການຕິດຕາມກວດກາການຈັດຕັ້ງປະຕິບັດບົດປະກອບຄຳເຫັນມ້ວນທ້າຍຂອງຄະນະກຳມະການ ຊີດໍ ສາກົນ ບັນຫາຂໍກຸນແຈ ແລະ ການວາງກົນໄກ ສະເໜີຕໍ່ກອງປະຊຸມ ອາຊຽນ ລະດັບສູງ ຄັ້ງທີ I ກ່ຽວກັບພາກປະຕິບັດຕົວຈິງອັນດີ ໃນການລາຍງານ, ການຕິດຕາມກວດກາ ແລະ ການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍ ການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (ຊີດໍ) ໃນວັນທີ 14-15 ມັງກອນ 2008, ທີ່ນະຄອນຫຼວງວຽງຈັນ, ສປປ ລາວ.
6. ບົດສະເໜີກ່ຽວກັບປະສົບການຂອງ ສປປ ລາວ ໃນການຂຽນບົດລາຍງານແຫ່ງຊາດກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (ຊີດໍ) ສະເໜີຕໍ່ກອງປະຊຸມ ອາຊຽນ ລະດັບສູງ ຄັ້ງທີ I ກ່ຽວກັບພາກປະຕິບັດຕົວຈິງອັນດີໃນການລາຍງານ, ການຕິດຕາມກວດກາ ແລະ ການຈັດຕັ້ງປະຕິບັດສົນທິສັນຍາ ວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (ຊີດໍ) ໃນວັນທີ 14-15 ມັງກອນ 2008 ທີ່ນະຄອນຫຼວງວຽງຈັນ, ສປປ ລາວ.
7. ປຶ້ມຮ່າງລັດຖະບັນຍັດຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍການສ້າງ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ, ກົມສົນທິສັນຍາ ແລະ ກົດໝາຍ, ກະຊວງການຕ່າງປະເທດ.

ປຶ້ມຄູ່ມືເຜີຍແຜ່ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ(ຊີດໍ) ສະບັບນີ້ຖືກຈັດພິມຂຶ້ນເປັນ ສະບັບທຳອິດຈຶ່ງບໍ່ອາດປາສະຈາກໄດ້ເຖິງຂໍ້ຂາດຕົກບົກຜ່ອງ, ສະນັ້ນຈຶ່ງຂໍຮຽກຮ້ອງມາຍັງບັນດາທ່ານຜູ້ທີ່ນຳໃຊ້ປຶ້ມຄູ່ ມືສະບັບນີ້ກະລຸນາຊ່ວຍປະກອບຄຳຄິດຄຳເຫັນ ແລະ ຕຳນິສິ່ງຂ່າວມາຍັງກອງເລຂາຄະນະກຳມາທິການເພື່ອຄວາມ ກ້າວໜ້າຂອງແມ່ຍິງແຫ່ງຊາດ ໃນນາມທີ່ເປັນຜູ້ສັງລວມຂໍ້ມູນ ແລະ ຈັດພິມ ເພື່ອຈະໄດ້ທຳການປັບປຸງແກ້ໄຂໃຫ້ແທດ ເໝາະກັບສະພາບຕົວຈິງໃຫ້ດີຂຶ້ນກ່ວາເກົ່າ.

<u>ສຳນັກງານນາຍົກລັດຖະມົນຕີ</u>

ກອງເລຂາ

ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ

(ຄ.ກ.ມ.ຊ)

ຫ້ອງ 104, ກະຊວງແຜນການ ແລະ ການລົງທຶນ
ຖະໜົນຫຼວງພະບາງ, ຕູ້ປ.ນ 4507, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ/ແຟັກ: (856-21) 243470
ໂທ: (856-20) 980 1868
ອີເມລ: laoncaw@laotel.com

**ຈັດພິມໂດຍ: ຫ້ອງການກອງເລຂາ ຄ.ກ.ມ.ຊ**

ສະໜັບສະໜູນໂດຍ: ອົງການສະຫະປະຊາຊາດ ກອງທຶນພັດທະນາສໍາລັບແມ່ຍິງ

**ພິມເທື່ອທໍາອິດປີ 2008** **ຈໍານວນ 1000 ຫົວ**

(ສະຫງວນລິຂະສິດ)